UNFPA



# ປະຊາກອນ ແລະ ການພັດທະນາ ໃນ ສປປ ລາວ

## ໂອກາດ, ສິ່ງທ້າທາຍ ແລະ ທາງເລືອກທາງນະໂຍບາຍ ເພື່ອການພັດທະນາເສດຖະກິດ-ສັງຄົມ

UNFPA

ເພື່ອໃຫ້ໂລກນີ້ເປັນບ່ອນທີ່ ການຖືພາທຸກຄັ້ງແມ່ນດ້ວຍຄວາມຕັ້ງໃຈ,
ການເກີດລູກທຸກຄັ້ງມີຄວາມປອດໄພ, ແລະ
ໄວໜຸ່ມທຸກຄົນມີໂອກາດບັນລຸເປົ້າໝາຍຕາມຄວາມສາມາດຂອງຕົນ.

# ປະຊາກອນ ແລະ ການພັດທະນາ ໃນ ສປປ ລາວ

ຄຳແນະນຳ ສະລັບ ໄລຍະຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8
(2016-2020)

ຜູ້ຂຽນ:
ທ່ານ ສາດສະດາຈານ Gavin W Jones

ເມສາ 2015

Copyright © 2015
ອົງການ ສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ
ສປປ ລາວ
ບ້ານໂພນສະຫວັນໃຕ້,
ຕູ້ ປ. ນ. 345
ນະຄອນຫຼວງວຽງຈັນ

**Disclaimer:** ທັດສະນະຄະຕິທີ່ ນໍາສະເໜີ ໃນບົດລາຍງານດັ່ງກ່າວນີ້ ແມ່ນຂອງຜູ້ຂຽນ ແລະ ອາດບໍ່ໄດ້ສ່ອງແສງ ເຖິງທັດສະນະຄະຕິຂອງອົງການ UNFPA

# ຄຳນຳ

ຄວາມເຂົ້າໃຈ ກ່ຽວກັບ ຜົນກະທົບຂອງການປ່ຽນແປງທາງດ້ານປະຊາກອນ ຕໍ່ກັບການພັດທະນາເສດຖະກິດ-ສັງຄົມ ແມ່ນໄດ້ມີການເພີ່ມຂຶ້ນ ເຊິ່ງສ່ອງແສງ ໃຫ້ເຫັນ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 6 ແລະ 7 (NSEDP). ບົດລາຍງານສະບັບນີ້ ແມ່ນຜົນມາຈາກຄວາມຮຽກຮ້ອງຕ້ອງການ ຂອງກະຊວງແຜນການ ແລະ ການລົງທຶນ ເພື່ອຮັບປະກັນວ່າບັນຫາປະຊາກອນ ໄດ້ຮັບການແກ້ໄຂ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016-2020), ເຊື່ອມເອົາການປ່ຽນແປງທາງດ້ານປະຊາກອນທີ່ຈຳເປັນຕ້ອງເອົາໃຈໃສ່ ໃນໄລຍະ 5 ປີ ຂອງການບັນລຸເປົ້າໝາຍທາງດ້ານເສດຖະກິດ-ສັງຄົມ.

ບົດລາຍດັ່ງກ່າວນີ້ ໄດ້ສະແດງໃຫ້ເຫັນວ່າ ປະຊາກອນລາວ ຈະສືບຕໍ່ຂະຫຍາຍຕົວ ເຖິງແມ່ນວ່າອັດຕາການເກີດຈະຫຼຸດລົງ. ການປ່ຽນແປງຂອງໂຄງປະກອບອາຍຸປະຊາກອນ ຂອງ ສປປ ລາວ ໄດ້ນຳມາເຊິ່ງຜົນປະໂຫຍດທີ່ເອີ້ນວ່າ “ໂບນັດທາງດ້ານປະຊາກອນ” ຫຼື “ປ່ອງຢ້ຽມໂອກາດທາງດ້ານປະຊາກອນ”, ເຊິ່ງຈະສືບຕໍ່ອີກ 30 ປີໃນຕໍ່ໜ້າ ແລະ ສາມາດປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ກັບການເຕີບໂຕຂອງເສດຖະກິດ ແລະ ຄວາມຮັ່ງມີ ແລະ ການພັດທະນາແບບຍືນຍົງ ໃນໄລຍະຍາວ ຂອງ ສປປ ລາວ. ແຕ່ວ່າ, ຜົນປະໂຫຍດນີ້ ຈະສາມາດບັນລຸໄດ້ ກໍ່ຕໍ່ເມື່ອຄວາມຕ້ອງ ການຂອງໄວໜຸ່ມ ໄດ້ຮັບການແກ້ໄຂ ໃນປະຈຸບັນ ເຊັ່ນ ຮັບປະກັນວ່າ ໄວໜຸ່ມ ມີການສຶກສາ, ມີສຸຂະພາບດີ, ມີທັກສະ, ແລະ ມີວຽກເຮັດງານທຳ.

ປັດໄຈປະຊາກອນ ຄວນສືບຕໍ່ໄດ້ຮັບການເອົາໃຈໃສ່ ໃນ ສປປ ລາວ, ດັ່ງທີ່ບົດລາຍງານສະບັບນີ້ ໄດ້ສະແດງໃຫ້ເຫັນສາຍພົວພັນລະຫວ່າງ ປະຊາກອນ ແລະ ການພັດທະນາເສດຖະກິດ-ສັງຄົມ ຢ່າງຈະແຈ້ງ. ການປ່ຽນແປງຂອງໂຄງປະກອບປະຊາກອນ ຂອງ ສປປ ລາວ ຈະນຳມາເຊິ່ງໂອກາດ ແລະ ສິ່ງທ້າທາຍ ຕໍ່ກັບ ລັດຖະບານ, ຊຸມຊົນ ແລະ ຄອບຄົວ. ດັ່ງນັ້ນ ຈຶ່ງມີຄວາມສຳຄັນ ສຳລັບ ນັກວາງແຜນ ໃນການຕິດຕາມທ່າອ່ຽງທາງດ້ານປະຊາກອນ ຢ່າງໃກ້ສິດ ລວມທັງ ທ່າອ່ຽງຂອງການຈະເລີນພັນ, ເພື່ອສາມາດປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການເພີ່ມທະວີຜົນປະໂຫຍດ ແລະ ຮັບມືກັບສິ່ງທ້າທາຍ ຈາກການປ່ຽນແປງທາງດ້ານປະຊາກອນ.

ຂ້າພະເຈົ້າ ຫວັງວ່າ ການວິໄຈນີ້ ແລະ ຂໍ້ແນະນຳຕ່າງໆ ຈະເພີ່ມຄວາມເຂົ້າໃຈ ແລະ ສິ່ງຜົນໃຫ້ມີສ້າງມາດຕະການ ແລະ ນະໂຍບາຍ ກ່ຽວກັບ ປັດໄຈປະຊາກອນ ໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ່ 8 ແລະ ແຜນພັດທະນາຂອງຂະແໜງການ ເຊິ່ງຈະເພີ່ມທະວີຜົນປະໂຫຍດທາງດ້ານປະຊາກອນ ເພື່ອການພັດທະນາເສດຖະກິດທີ່ໄວວາ ແລະ ຍືນຍົງ ຂອງ ສປປ ລາວ.

Dr. Hassan Mohtashami
UNFPA Representative, Lao PDR

# ສາລະບານ


ສະຫຼຸບຫຍໍ້ ........ 01

ພາກສະເໜີ ........ 05

ດ້ານປະລິມານຂອງປະຊາກອນ ........ 05

ກໍາລັງແຮງງານ ........ 12

ທ່າອ່ຽງປະຊາກອນ ແລະ ຄຸນະພາບຂອງຊັບພະຍາກອນມະນຸດ ........ 16

ບັນຫາຕ່າງໆ ກ່ຽວກັບ ຂໍ້ມູນ ........ 28

ບາງຄໍາແນະນໍາທາງດ້ານນະໂຍບາຍກ່ຽວກັບທ່າອ່ຽງທາງດ້ານປະຊາກອນ ........ 29

ເອກະສານອ້າງອີງ ........ 33

# ສະຫຼຸບຫຍໍ້

- ສປປ ລາວ ກໍາລັງປະເຊີນໜ້າກັບການຂະຫຍາຍຕົວຂອງປະຊາກອນ ຢ່າງເຫັນໄດ້ຊັດເຈນ. ການຄາດຄະເນປະຊາກອນທີ່ເປັນທາງການໄດ້ສະແດງໃຫ້ເຫັນ ການເພີ່ມຂຶ້ນລະຫວ່າງ 1.71 ຫາ 1.91 ລ້ານຄົນ ໃນຊ່ວງປີ 2015 ຫາ ປີ 2030, ແລະ ຈໍານວນປະຊາກອນ ລະຫວ່າງ 10.25 ຫາ 10.72 ລ້ານຄົນພາຍໃນປີ 2050.
- ການຂະຫຍາຍຕົວຂອງປະຊາກອນ ແຕ່ລະກຸ່ມອາຍຸ ແມ່ນມີຄວາມແຕກຕ່າງກັນຫຼາຍ. ໃນໄລຍະຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 8, ຈໍານວນເດັກນ້ອຍໃນເກນອາຍຸເຂົ້າຮຽນ (5-14 ປີ) ຄາດວ່າຈະຫຼຸດລົງ 3.7%, ໃນຂະນະທີ່ກຸ່ມປະຊາ ກອນໄວເຮັດວຽກແມ່ນຈະເພີ່ມຂຶ້ນ 10.6% ແລະ ປະຊາກອນຜູ້ສູງອາຍຸ ເພີ່ມຂຶ້ນ 10.1%.
- ລາວຍັງບໍ່ໄດ້ສິ້ນສຸດຂ້າມຜ່ານ ທາງດ້ານປະຊາກອນ ໄລຍະທີ 1 - ເຊິ່ງແມ່ນການຫຼຸດລົງຂອງອັດຕາການຕາຍ ແລະການຈະເລີນພັນສູ່ລະດັບຕໍ່າ ແຕ່ວ່າທ່າອ່ຽງຂອງ ສປປ ລາວ ແມ່ນໄປໃນທິດທາງນີ້. ອັດຕາການຕາຍຂອງເດັກນ້ອຍຕໍ່າກວ່າ 5 ປີ ໄດ້ຫຼຸດລົງມາເປັນ 79 ຄົນ ຕໍ່ ເດັກເກີດມີຊີວິດ 1,000 ຄົນ ໃນປີ 2010-11, ແລະຄາດວ່າຈະສາມາດບັນລຸເປົ້າໝາຍສະຫັດສະຫວັດ ເຊິ່ງແມ່ນ 70, ແຕ່ອັດຕາການຕາຍຂອງເດັກອ່ອນ ແມ່ນຍັງບໍ່ສາມາດບັນລຸໄດ້. ອັດຕາການຈະເລີນພັນທັງໝົດ ແມ່ນ 3.2 (ໃນປີ 2008 – 11) ເຊິ່ງແມ່ນຢູ່ໃນລະດັບ 50% ສູງກວ່າລະດັບການຈະເລີນພັນທົດແທນ. ຄາດຄະເນວ່າອັດຕາການຈະເລີນພັນ ຂອງ ສປປ ລາວ ຈະຫຼຸດລົງໃນລະດັບທົດແທນ 2.1 ໃນອີກ 30 ປີ ຕໍ່ໜ້າ. ແຕ່ວ່າ ແຜນງານການວາງແຜນຄອບຄົວທີ່ມີປະສິດຕິພາບ ຈະຊ່ວຍໃນການຫຼຸດອັດຕາການຈະເລີນພັນ ສູ່ລະດັບນີ້ໃຫ້ໄວຂຶ້ນ ແລະ ຊ່ວຍໃຫ້ແມ່ຍິງສາມາດປະສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຢ່າງມີປະສິດຕິພາບ.
- ເນື່ອງຈາກໂຄງປະກອບອາຍຸຂອງ ປະຊາກອນລາວ ຍັງສະທ້ອນໃຫ້ເຫັນເຖິງການຈະເລີນພັນທີ່ສູງໃນໄລຍະຜ່ານມາ ເຮັດໃຫ້ຍັງມີຈໍານວນປະຊາກອນທີ່ສູງ ເຄື່ອນຍ້າຍຂຶ້ນຕາມປີຣະມິດອາຍຸ. ສິ່ງຜົນໃຫ້ປະຊາກອນສືບຕໍ່ຂະຫຍາຍຕົວຜ່ານ "ການເພີ້ມຂຶ້ນຂອງປະຊາກອນໃນໄລຍະຜ່ານມາ" ("population momemtum") - ໝາຍຄວາມວ່າຈໍານວນປະຊາກອນ ຍັງຈະສືບຕໍ່ເພີ່ມຂຶ້ນເປັນເວລາດົນ ຫຼັງຈາກທີ່ອັດຕາການຈະເລີນພັນຫຼຸດລົງເຖິງລະດັບທົດແທນ.
- ການປ່ຽນແປງໂຄງສ້າງດ້ານອາຍຸ ຂອງປະຊາກອນລາວແມ່ນນໍາໄປສູ່ "ຜົນປະໂຫຍດທາງດ້ານປະຊາກອນ" (demographic bonus), ເຊິ່ງໝາຍຄວາມວ່າອັດຕາສ່ວນກຸ່ມປະຊາກອນ ໃນເກນອາຍຸເຮັດວຽກຈະ

ເພີ່ມຂຶ້ນ ແລະ ອັດຕາເອື່ອຍອີງຕໍ່ກັບໜຶ່ງຜູ້ອອກແຮງງານໜ້ອຍລົງ. ໃນປີ 2015 ອັດຕາເອື່ອຍອີງຈະຫຼຸດລົງເຖິງ 0.62, ໃນປີ 2030 ຈະຫຼຸດລົງເຖິງ 0.51 ແລະ ຈະຍັງຕໍ່າລົງຮອດ 0.43 ໃນປີ 2045. ມັນຈະຄ່ອຍໆເລີ່ມຕົ້ນເພີ່ມຂຶ້ນພາຍຫຼັງຈາກ ປີ 2050.

- ປະຊາກອນຜູ້ສູງອາຍຸ ຍັງບໍ່ທັນເປັນບັນຫາສໍາລັບ ສປປ ລາວ. ອັດຕາປະຊາກອນຜູ້ສູງອາຍຸ ແມ່ນຍັງຕໍ່າຢູ່ (3.8%), ແລະ ຈະເລີ່ມເພີ່ມຂຶ້ນຢ່າງໄວວາ ພາຍຫຼັງຈາກ ປີ 2020. ໃນປີ 2050, ອັດຕາສ່ວນປະຊາກອນຜູ້ສູງອາຍຸໃນ ສປປ ລາວ ຍັງຈະຕໍ່າກວ່າ ຕົວເລກໃນປະເທດໄທໃນປະຈຸບັນ.
- ລາວເປັນປະເທດທີ່ມີຄວາມໜາແໜ້ນ ທາງດ້ານປະຊາກອນຕໍ່າ (ຕໍ່າທີ່ສຸດໃນອາຊຽນ), ແຕ່ມັນກໍ່ມີພື້ນດິນຍ້ອນ: ເນື້ອທີ່ສ່ວນໃຫຍ່ຂອງປະເທດແມ່ນເປັນເຂດພູສູງ ແລະ ບໍ່ສາມາດທໍາການຜະລິດໄດ້. ຄາດວ່າດິນປູກຝັງແມ່ນປະມານ 1.1 ເຮັກຕາ ຕໍ່ຄົວເຮືອນ ຫຼື ດິນທີ່ສາມາດທໍາການຜະລິດໄດ້ແມ່ນປະມານ 1.7 ເຮັກຕາ ຕໍ່ຄອບຄົວໃນເຂດຊົນນະບົດ; ຕົວເລກນີ້ຈະບໍ່ຫຼຸດລົງຫຼາຍເມື່ອປະຊາກອນມີການຂະຫຍາຍຕົວ, ຍ້ອນວ່າປະຊາກອນ ທີ່ອີງໃສ່ກະສິກໍາໃນການດໍາລົງຊີວິດເປັນສ່ວນໃຫຍ່ຈະບໍ່ມີການປ່ຽນແປງໃນຂະນະທີ່ການເຄື່ອນຍ້າຍເຂົ້າສູ່ຕົວເມືອງຈະເພີ່ມຂຶ້ນ.
- ການເຄື່ອນຍ້າຍສາກົນ ແມ່ນບໍ່ມີຂໍ້ມູນພຽງພໍໃນສະຖິຕິຂອງລາວ. ບໍ່ສາມາດຄາດກະໄດ້ວ່າມີຈໍານວນເຂົ້າມາ ແລະ ອອກໄປເຮັດວຽກນອກປະເທດເທົ່າໃດ.
- ເຖິງຢ່າງໃດກໍຕາມ ກໍເປັນທີ່ຮັບຮູ້ໄດ້ວ່າມີແຮງງານຈໍານວນຫຼາຍພໍສົມຄວນຂ້າມຊາຍແດນລາວ ແລະ ສ່ວນຫຼາຍແມ່ນແບບບໍ່ມີໜັງສືຖືກກົດໝາຍ. ຄາດວ່າຈໍານວນເຄື່ອນຍ້າຍຈະເພີ່ມຂຶ້ນ (ອາດຈະສາມາດບັນທຶກໄດ້) ເນື່ອງຈາກການສ້າງຂົວ ແລະ ເສັ້ນທາງຄົມມະນາຄົມທີ່ເພີ່ມຂຶ້ນ ເພື່ອເຊື່ອມຕໍ່ກັບບັນດາປະເທດອື່ນໆ. ການເຮັດວຽກຢູ່ໃນຂະແໜງກະສິກໍາ ແມ່ນເລີ່ມຫຼຸດລົງເທື່ອລະໜ້ອຍສ່ວນຂະແໜງການບໍລິການ ແລະ ອຸດສະຫະກໍາແມ່ນເພີ່ມຂຶ້ນ. ການຜະລິດຂອງແຕ່ລະຫົວໜ່ວຍແຮງງານ ແມ່ນແຕກຕ່າງກັນຢ່າງຂາດຂັ້ນ ໃນແຕ່ລະຂະແໜງການຜະລິດ.
- ການຜະລິດ ໃນຂະແໜງອຸດສະຫະກໍາ ແມ່ນສູງເກືອບ 8 ເທົ່າ ຕົວສົມທຽບໃສ່ຂະແໜງກະສິກໍາ, ເກືອບ 5 ເທົ່າຕົວໃນຂະແໜງບໍລິການ ສົມທຽບໃສ່ຂະແໜງກະສິກໍາ. ການມີສ່ວນຮ່ວມຂອງກໍາລັງແຮງງານເພດຍິງແມ່ນມີອັດຕາສູງຂຶ້ນ, ລວມທັງໃນເຂດຕົວເມືອງເຖິງແມ່ນວ່າ ອັດຕາການຈະເລີນພັນສູງກວ່າບັນດາປະເທດອາຊຽນອື່ນໆກໍຕາມ. ຫົວໜ່ວຍແຮງງານເຫຼົ່ານີ້ສ່ວນໜ້ອຍແມ່ນຢູ່ໃນແຮງງານ ໃນລະບົບເຊິ່ງເຮັດໃຫ້ແມ່ຍິງສາມາດເຮັດວຽກ ແລະ ລ້ຽງດູລູກໄປພ້ອມກັນ.
- ການເພີ່ມຂຶ້ນຂອງແຮງງານ ໂດຍຜ່ານການປັບປຸງໂຄງປະກອບຂອງເສດຖະກິດ ໄປສູ່

ການຜະລິດເປັນສິນຄ້າຫຼາຍກ່ວາ ແມ່ນມີຄວາມສຳຄັນ. ຍຸດທະສາດນີ້ຕ້ອງປະກອບດ້ວຍ 2 ສ່ວນ: (ກ) ເພີ່ມການຜະລິດໃນຂະແໜງກະສິກຳ ແລະ (ຂ) ພັກດັນຂະແໜງການທີ່ບໍ່ແມ່ນຂະແໜງກະສິກຳທີ່ກຳລັງຂະຫຍາຍຕົວ ແລະ ສາມາດສ້າງວຽກເພື່ອຮັບເອົາກຸ່ມຄົນທີ່ຍົກຍ້າຍ ຈາກຂະແໜງການກະສິກຳ. ສິ່ງທ້າທາຍທີ່ສຳຄັນແມ່ນການຍົກສູງລະດັບການສຶກສາ ແລະ ການຝຶກອົບຮົມໃຫ້ແຮງງານໃນປະຈຸບັນ ຫຼື ຜູ້ທີ່ກຳລັງຈະເຂົ້າເປັນກຳລັງແຮງງານໃໝ່.

- ໃນໄລຍະ 20 ປີຜ່ານມາ ຈົນເຖິງປີ 2005, ນະຄອນຫຼວງວຽງ ຈັນໄດ້ຮັບຮອງເອົາຜູ້ເຄື່ອນຍ້າຍຈາກທຸກໆພາກຂອງລາວ. ຜູ້ເຄື່ອນຍ້າຍສ່ວນຫຼາຍແມ່ນມາຈາກ ບັນດາແຂວງພາກເໜືອ ແລະ ແຂວງວຽງຈັນ. ຢູ່ພາກໃຕ້ ຜູ້ເຄື່ອນຍ້າຍສ່ວນຫຼາຍ ແມ່ນອອກໄປສູ່ປະເທດໄທ.
- ລາວໄດ້ຫັນເປັນຕົວເມືອງຢ່າງໄວວາ ຄາດວ່າຈະມີການສືບຕໍ່ ຂະຫຍາຍຕົວຂອງປະຊາກອນໃນຕົວເມືອງ, ອາດເພີ່ມຂຶ້ນເຖິງ 50% ໃນຕົ້ນປີ 2030. ນີ້ໝາຍວ່າປະຊາກອນໃນເຂດຊົນນະບົດຈະບໍ່ເພີ່ມຂຶ້ນ. ປະຊາກອນໃນນະຄອນຫຼວງວຽງຈັນ ອາດມີເຖິງ 2 ລ້ານຄົນໃນປີດັ່ງກ່າວ, ແລະ ບັນດາເມືອງສຳຄັນໆ ແມ່ນຈະຂະຫຍາຍຕົວຢ່າງໄວວາໂດຍສະເພາະ ບັນດາເມືອງທີ່ມີການຄົມມະນາຄົມເຊື່ອມຕໍ່ກັບປະເທດອື່ນໆ, ດັ່ງນັ້ນເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ມີ ດິນແດນເຊື່ອມຕໍ່ກັບປະເທດອື່ນ ແທນທີ່ຈະເປັນພຽງປະເທດບໍ່ມີທາງອອກສູ່ທະເລ.
- ຄວາມຈຳເປັນຕໍ່ການຍົກລະດັບການສຶກສາໃຫ້ແກ່ກຳລັງແຮງງານ ແມ່ນເປັນສິ່ງສຳຄັນສຳລັບ ສປປ ລາວ ເນື່ອງຈາກວ່າລາວຈະກາຍເປັນປະເທດທີ່ຫັນມາເປັນຕົວເມືອງຫຼາຍຂຶ້ນ ພ້ອມກັບການເພີ່ມຂຶ້ນຂອງການຄ້າສາກົນ. ສປປ ລາວ ແມ່ນນຳຫຼັງບັນດາປະເທດອາຊຽນກ່ຽວກັບ ອັດຕາການເຂົ້າຮຽນຂອງເດັກໃນລະດັບປະຖົມ ແລະ ມັດທະຍົມ, ລວມທັງອັດຕາການຈົບຊັ້ນປະຖົມທີ່ຕ່ຳມີພຽງແຕ່ 67% ແລະ ລະດັບການຮູ້ໜັງສືຂອງປະຊາກອນຜູ້ໃຫຍ່ ແລະ ໃນກຸ່ມກຳລັງຮຽນໜັງສື. ການປັບປຸງຄຸນະພາບຂອງການສຶກສາ ຈຶ່ງແມ່ນຄວາມຈຳເປັນອັນຮີບດ່ວນ.
- ນອກຈາກຜົນກະທົບຕໍ່ການຜະລິດຂອງກຳລັງແຮງງານແລ້ວ, ການເພີ່ມລະດັບການສຶກສາ ຍັງຜົນກະທົບທາງບວກຕໍ່ກັບການຫຼຸດຜ່ອນອັດຕາການຕາຍ ແລະ ການເຈັບເປັນ, ເພີ່ມອາຍຸການແຕ່ງງານ, ຫຼຸດຜ່ອນແຮງງານເດັກ ແລະ ຂົງເຂດອື່ນໆອີກຫຼາກຫຼາຍ.
- ບັນຫາສຸຂະພາບຈະເລີນພັນ ແມ່ນສຳຄັນຕໍ່ການພັດທະນາປະເທດ. ອັດຕາການບໍ່ຢາກໄດ້ລູກ ແຕ່ບໍ່ໃຊ້ວິທີຄຸມກຳເນີດແມ່ນຍັງຢູ່ໃນລະດັບສູງ 20% ເຖິງແມ່ນວ່າມັນຈະຫຼຸດລົງຢ່າງໄວວາຕັ້ງແຕ່ປີ 2000 (40%) ມາຮອດ ປີ 2005 ແມ່ນຫຼຸດຊ້າລົງ (27%). ການແກ້ໄຂບັນຫາດັ່ງກ່າວໂດຍ

ຜ່ານການສົ່ງເສີມ ແລະ ຂະຫຍາຍແຜນງານບໍລິການວາງແຜນຄອບຄົວ ແມ່ນຈະມີຜົນກະທົບດ້ານບວກ ຕໍ່ກັບການຫຼຸດອັດຕາການຕາຍຂອງເດັກເກີດໃໝ່ ແລະ ການຕາຍຂອງແມ່. ນີ້ສາມາດຊ່ວຍໃຫ້ແມ່ຍິງມີບົດບາດສຳຄັນ ໃນການປະກອບສ່ວນໃນວຽກງານ ແລະ ສາມາດກຳນົດຂະໜາດຄອບຄົວຕາມຄວາມຕ້ອງການ.

- ຂໍ້ມູນທີ່ຊັດເຈນ ແລະ ທັນເວລາແມ່ນສຳຄັນສຳລັບການວາງແຜນທີ່ມີປະສິດທິພາບ ແລະ ການຕິດຕາມກວດກາແຜນງານພັດທະນາ. ການຄາດຄະເນປະຊາກອນທີ່ເປັນທາງການ ແມ່ນຕ້ອງໄດ້ຮັບການເຜີຍແຜ່ ແລະ ທາງລັດຖະບານມີຄວາມຈຳເປັນຕ້ອງໄດ້ເນັ້ນໜັກ ໃຫ້ທຸກໆອົງການລັດຖະບານນຳໃຊ້ເພື່ອຄວາມສອດຄ່ອງ ແລະ ເປັນເອກະພາບ. ເຖິງຢ່າງໃດກໍຕາມການຄາດຄະເນຂອງປະຊາກອນທີ່ເປັນທາງການຕ້ອງໄດ້ຄາດຄະເນໃຫ້ແຕ່ລະແຂວງ. ຄວາມຕ້ອງການທຳອິດ ແມ່ນການປັບປຸງການຈົດທະບຽນກ່ຽວກັບປະຊາກອນທີສຳຄັນຕ່າງໆ ເພື່ອໃຫ້ສາມາດເປັນເຄື່ອງມືໃນການວາງແຜນທີ່ມີປະສິດທິຜົນ.

# ພາກສະເໜີ

ບົດລາຍສະບັບນີ້ ໄດ້ກວດສອບເບິ່ງບັນດາແນວໂນ້ມ/ທ່າອ່ຽງການປ່ຽນແປງທາງດ້ານປະຊາກອນໃນ ສປປ ລາວ, ຜົນກະທົບຕໍ່ການພັດທະນາ, ແລະ ບາງບັນຫາກ່ຽວພັນກັບນະໂຍບາຍ. ຈຸດສຸມຂອງເອກະສານສະບັບນີ້ ແມ່ນເນັ້ນໃສ່ໄລຍະຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 8, ເຊິ່ງຖືວ່າເປັນໄລຍະທີ່ຂ້ອນຂ້າງສັ້ນໃນການສຶກສາ ກ່ຽວກັບແນວໂນ້ມທາງດ້ານປະຊາກອນ, ດັ່ງນັ້ນມີຄວາມຈຳເປັນຈະຕ້ອງໄດ້ສົນທະນາ ໂດຍອີງໃສ່ "ວິໄສທັດ" ໄລຍະຍາວ. ມີສອງແງ່ມູມຫຼັກຂອງປະຊາກອນທີ່ກ່ຽວຂ້ອງ ກັບການວາງແຜນຄື: ການປ່ຽນແປງທາງດ້ານປະລິມານ (ລວມເຖິງໂຄງປະກອບດ້ານອາຍຸ ແລະ ການແຈກຢາຍທາງພູມສາດຂອງພົນລະເມືອງ); ແລະ ແງ່ມູມອື່ນໆ ທາງດ້ານຄຸນະພາບຂອງຊັບພະຍາກອນມະນຸດ, ລວມທັງທາງດ້ານສຸຂະພາບ ແລະ ການສຶກສາ. ພື້ນຖານການສົນທະນາກ່ຽວກັບແນວໂນ້ມ ຂອງປະຊາກອນໃນການວິໄຈນີ້ ແມ່ນອີງໃສ່ການຄາດຄະເນປະຊາກອນ.

# ດ້ານປະລິມານຂອງປະຊາກອນ

**ພົນລະເມືອງຂອງ ສປປ ລາວ ຈະເພີ່ມຂຶ້ນຢ່າງເຫັນໄດ້ຊັດເຈນ, ບໍ່ວ່າຈະວາງນະໂຍບາຍ ດ້ານປະຊາກອນແນວໃດກໍ່ຕາມ.**

ການຄາດຄະເນປະຊາກອນ ສຳລັບ ສປປ ລາວ ໃນປະຈຸບັນໄດ້ກະກຽມຫຼັງຈາກໄດ້ຮັບຜົນຂອງການສຳຫຼວດດັດຊະນີ ໝາຍສັງຄົມລາວປີ 2011-12 (LSIS), ເຊິ່ງຜົນຂອງການຄາດຄະເນໄດ້ສະແດງໃຫ້ເຫັນວ່າ ປະຊາກອນລາວ ຈະເພີ່ມຂຶ້ນຈາກ 6.2 ລ້ານຄົນໃນປີ 2010 ມາເປັນ 10.3 ລ້ານ ຫາ 10.7 ລ້ານຄົນໃນປີ 2050, ນັ້ນຄືການເພີ່ມຂຶ້ນຂອງປະຊາກອນລະຫວ່າງ 4.0 ລ້ານ ຫາ 4.5 ລ້ານຄົນ, ຫຼື ລະຫ່ວາງ 65% ຫາ 72%.

ສົມມຸດຕິຖານກ່ຽວກັບອັດຕາການຈະເລີນພັນທີ່ນຳໃຊ້ເຂົ້າໃນການຄາດຄະເນຄັ້ງນີ້ ແມ່ນອີງໃສ່ການຄາດຄະເນວ່າ ອັດຕາສະພາວະຈະເລີນພັນຈະຫຼຸດລົງຮອດລະດັບທົດແທນ ເມື່ອໃດ (ໝາຍວ່າ ອັດຕາຈະເລີນພັນລວມ (TFR) ເທົ່າກັບ 2.1). ການສົມມຸດຕິຖານນີ້ແມ່ນຄາດວ່າຈະເກີດຂຶ້ນໃນປີ 2040 ສຳລັບການຄາດຄະເນທີ່ສູງ, ໃນປີ 2035 ສຳລັບການຄາດຄະເນປານກາງ ແລະ ໃນປີ 2030 ສຳລັບການຄາດຄະເນທີ່ຕ່ຳ.

ການຄາດຄະເນລະດັບປານກາງຂອງ ສປປ ລາວ ແມ່ນໃກ້ຄຽງກັບການຄາດຄະເນລະດັບປານກາງ ຂອງອົງການສະຫະປະຊາຊາດ, ເຊິ່ງສະແດງຜົນ ຈຳນວນພົນລະເມືອງລາວໃນ

ປີ 2050 ແມ່ນ 10.6 ລ້ານຄົນ. ເຖິງຢ່າງໃດກໍຕາມ, ການຄາດຄະເນຂອງອົງການສະຫະປະຊາຊາດ ແມ່ນໄດ້ໃຊ້ສົມມຸດຖານການຈະເລີນພັນທີ່ກວ້າງກວ່າ, ເຮັດໃຫ້ຜົນຂອງການຄາດຄະເນໃນປີ 2050 ຢູ່ໃນລະຫວ່າງ 9.1 ລ້ານຄົນ ສຳລັບການຄາດຄະເນລະດັບຕໍ່າຫາ 12.2 ລ້ານຄົນ ໃນກໍລະນີການຄາດຄະເນລະດັບສູງ.

ການວິໄຈຂອງບົດລາຍງານນີ້ ໄດ້ສະແດງໃຫ້ເຫັນວ່າ ທ່າອ່ຽງຂອງອັດຕາການຈະເລີນພັນຂອງ ສປປ ລາວ ໃນອານາຄົດແມ່ນບໍ່ມີຄວາມແນ່ນອນ. ຕາມປະສົບການຂອງສາກົນໄດ້ຊີ້ໃຫ້ເຫັນວ່າ ໃນເມື່ອອັດຕາຈະເລີນພັນເຊັ່ນດຽວກັບໃນສປປ ລາວ ທີ່ເພີ່ມຂຶ້ນສູງສຸດແລ້ວ, ໂດຍປົກະຕິແລ້ວ ມັນຄ່ອຍໆຫຼຸດລົງຫາລະດັບທົດແທນ, ເຖິງແມ່ນວ່າໃນບາງປະເທດອັດຕາຈະເລີນພັນຈະມີການຄົງຢູ່ຄືເກົ່າ ຢູ່ໃນຊ່ວງເວລາໄລຍະໜຶ່ງ. ອັດຕາການຈະເລີນພັນໃນ ສປປ ລາວ ໄດ້ຫຼຸດລົງຈົນເຖິງລະດັບທົດແທນແລ້ວໃນເຂດຕົວເມືອງ, ໃນກຸ່ມທີ່ມີລະດັບການສຶກສາລະດັບເໜືອມັດທະຍົມ, ແລະ ໃນກຸ່ມຄົນຮັ່ງມີທີ່ສຸດ ແລະ ສາມາດຄາດຄະເນວ່າ ມັນຈະສືບຕໍ່ຫຼຸດລົງ ເມື່ອປະຊາກອນເຂົ້າມາສູ່ຕົວເມືອງໃຫຍ່ຫຼາຍຂຶ້ນ, ມີການສຶກສາທີ່ດີຂຶ້ນ ແລະ ມີຄວາມຮັ່ງມີຫຼາຍຂຶ້ນ.

ໃນການຄາດຄະເນເປັນທາງການຂອງ ສປປ ລາວ, ຈຳນວນປີສົມມຸດຕິຖານສຳລັບອັດຕາຈະເລີນພັນລວມທີ່ຈະຫຼຸດລົງຈາກ 3.2 ຫາລະດັບທົດແທນ (2.1) ແມ່ນດັ່ງຕໍ່ໄປນີ້:

| | | |
|---|---|---|
| ໃນການຄາດຄະເນສູງ | – | 30 ປີ |
| ໃນການຄາດຄະເນປານກາງ | – | 25 ປີ |
| ໃນການຄາດຄະເນຕໍ່າ | – | 20 ປີ |

ການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2011-12 ສະແດງໃຫ້ເຫັນວ່າອັດຕາຈະເລີນ 5.0 ມາເປັນ 3.2 ໂດຍໃຊ້ເວລາພຽງແຕ່ 12 ປີ. ການຄາດຄະເນການຫຼຸດລົງຂອງອັດຕາຈະເລີນພັນຈາກ 3.2 ຫາ 2.1 (20-30 ປີ) ແມ່ນຖືວ່າຕໍ່າກວ່າຫຼາຍ.

ການຫຼຸດລົງຂອງອັດຕາຈະເລີນພັນ ຈາກ 3.2 ເຖິງລະດັບທົດແທນ (2.1) ໃນປະເທດອື່ນໆ ແມ່ນໃຊ້ເວລາດົນປານໃດ?

| | |
|---|---|
| ປະເທດຫວຽດນາມ,<br>ປະເທດອີຣານ | 5-6 ປີ |
| ປະເທດຕູນີເຊຍ | 8 ປີ |
| ປະເທດໄທ | 10 ປີ |
| ປະເທດບຣາຊິວ | 16 ປີ |
| ປະເທດໂມຣອກໂຄ,<br>ປະເທດອາລເຈເຣຍ | 32 ປີ |
| ປະເທດອິນໂດເນເຊຍ | 32 ປີ |
| ປະເທດກຳປູເຈຍ | 40 ປີ |

ການຫຼຸດລົງຂອງອັດຕາຈະເລີນພັນ ຈາກ 3.2 ມາເປັນ 2.1 ໃນບັນດາເປັນເທດອື່ນໆ ແມ່ນມີຄວາມແຕກຕ່າງກັນຢ່າງເຫັນໄດ້ຈະແຈ້ງ. ໃນ

ຂະນະທີ່ການຄາດຄະເນປະຊາກອນ ຂອງ ສປປ ລາວ ແມ່ນຄາດວ່າອັດຕາຄວາມໄວ ຂອງການຫຼຸດລົງ ຂອງອັດຕາຈະເລີນພັນຈະ ຊ້າລົງ, ເຮັດໃຫ້ເຫັນຄວາມຈໍາເປັນສໍາລັບນັກ ວາງແຜນໃນ ສປປ ລາວ ທີ່ຕ້ອງເຝົ້າຕິດຕາມ ແນວໂນ້ມຂອງທ່າອ່ຽງ ຂອງການຈະເລີນພັນ ຢ່າງລະມັດລະວັງ, ເພື່ອໃຫ້ກໍານົດໄດ້ຢ່າງທັນ ການວ່າອັດຕາການຈະເລີນພັນ ເປັນໄປຕາມ ສົມມຸດຕິຖານທີ່ວາງໄວ້ ໃນການຄາດຄະເນ ເປັນທາງການ ຫຼື ບໍ່. ຖ້າຫາກວ່າການຫຼຸດລົງ ຂອງອັດຕາການຈະເລີນພັນ ຫາກເປັນໄປ ຕາມແບບທີ່ຄ້າຍຄືກັບປະເທດອື່ນ ເຊັ່ນປະ ເທດຫວຽດນາມ ແລະ ປະເທດໄທ ທີ່ຫຼຸດລົງ ຢ່າງໄວວາ, ການຄາດຄະເນອາດຈະຕ້ອງໄດ້ ມີການປັບປຸ່ງໃຫ້ທັນກັບສະພາບການ, ແຕ່ ຖ້າຫາກວ່າ ມັນເປັນໄປຄືກັບການປ່ຽນແປງ ຕາມຈັງວະທີ່ຊ້າກວ່າໃນບາງປະເທດ, ມັນກໍ ຈະເປັນໄປຕາມການຄາດຄະເນຕາມທີ່ເປັນຢູ່

## ການບໍ່ໄດ້ຮັບການສະໜອງຕາມຄວາມຕ້ອງການໃນການເຂົ້າເຖິງການວາງແຜນຄອບຄົວ ແລະ ສາຍພົວພັນກັບການຈະເລີນພັນ

ເຫັນໄດ້ຂ້ອນຂ້າງຊັດເຈນວ່າໃນ ສປປ ລາວ ຂະໜາດຂອງຄອບຄົວທີ່ຕ້ອງການ ແມ່ນມີ ຂະໜາດນ້ອຍລົງ. ອີງຕາມການສໍາຫຼວດດັດ ຊະນີໝາຍສັງຄົມລາວ ປີ 2011-12, ສໍາລັບ ແມ່ຍິງທີ່ມີລູກແລ້ວ 3 ຄົນ, ມີພຽງ 12% ເທົ່າ ນັ້ນທີ່ຕ້ອງການລູກຕື່ມອີກ ແລະ 5% ຍັງບໍ່ໄດ້ ຕັດສິນໃຈ. ສ່ວນສໍາລັບແມ່ຍິງທີ່ມີລູກ ແລ້ວ 2 ຄົນ, ມີພຽງ 32% ເທົ່ານັ້ນທີ່ຕ້ອງການເອົາ ລູກອີກ ແລະ 7% ຍັງບໍ່ໄດ້ຕັດສິນໃຈ.

ອັດຕາຂອງແມ່ຍິງທີ່ບໍ່ຢາກມີລູກ ແຕ່ບໍ່ໃຊ້ວິທີ ຄຸມກໍາເນີດໃນ ສປປ ລາວ ແມ່ນສູງຫຼາຍ. ນີ້ ໝາຍຄວາມວ່າ ແມ່ຍິງໃນໄວຈະເລີນພັນຜູ້ທີ່ ບໍ່ໄດ້ໃຊ້ການຄຸມກໍາເນີດວິທີໃດໆເລີຍ ແຕ່ຍັງ ບໍ່ທັນຢາກມີລູກ (ເວັ້ນໄລຍະຫ່າງ) ຫຼື ຜູ້ທີ່ ບໍ່ຢາກໄດ້ລູກອີກແລ້ວ (ຈໍາກັດການເກີດ). ຜົນ ການສໍາຫຼວດສຸຂະພາບຈະເລີນພັນ ປີ 2005, ພົບວ່າ 29% ຂອງແມ່ຍິງໃນໄວຈະເລີນພັນ ແມ່ນບໍ່ຕ້ອງການມີລູກ ແຕ່ບໍ່ໄດ້ໃຊ້ວິທີການ ຄຸມກໍາເນີດ. ການສໍາຫຼວດດັດຊະນີໝາຍສັງ ຄົມລາວ ໃນປີ 2011-12 ໄດ້ສະແດງໃຫ້ເຫັນ ອັດຕາສ່ວນດັ່ງກ່າວ ຄື 19.9% (8.2% ສໍາລັບ ການເກີດລູກຫ່າງ ແລະ 11.8% ສໍາລັບການ ຈໍາກັດການເກີດ). ການນໍາໃຊ້ວິທີການຄຸມກໍາ ເນີດ ແມ່ນເພີ່ມຂຶ້ນໃນຊ່ວງເວລາລະຫວ່າງ ການສໍາຫຼວດ ສອງຄັ້ງດັ່ງກ່າວ – ຄືຈາກ 38% ໃນປີ 2005 ຫາ 49.8% ໃນປີ 2011-12. ຕາມຄວາມຈິງແລ້ວ ເປີເຊັນຂອງແມ່ຍິງທີ່ຍັງ ບໍ່ທັນຕ້ອງການມີລູກ ແຕ່ບໍ່ໄດ້ໃຊ້ວິທີຄຸມກໍາ ເນີດບໍ່ໄດ້ຫຼຸດລົງຫຼາຍ ໃນຂະນະທີ່ການໃຊ້ ວິທີການຄຸມກໍາເນີດ ໄດ້ເພີ່ມຂຶ້ນຢ່າງເຫັນໄດ້ ຊັດເຈນ ເຊິ່ງນີ້ມັນເປັນການສະແດງໃຫ້ເຫັນ ວ່າມັນມີການເພີ່ມຂຶ້ນ ຂອງອັດຕາສ່ວນຂອງ ຄູ່ສາມີພັນລະຍາ ທີ່ຕ້ອງການຄວບຄຸມຈໍາ ນວນລູກທີ່ພວກເຂົາຢາກມີ. ດັ່ງນັ້ນຖ້າຫາກ ວ່າ ຄົນສ່ວນໃຫຍ່ໃນກຸ່ມທີ່ຍັງບໍ່ທັນຕ້ອງການ ມີລູກແຕ່ບໍ່ໄດ້ຄຸມກໍາເນີດ ສາມາດເຂົ້າເຖິງ ການຄຸມກໍາເນີດ - ສົມມຸດວ່າ ເຄິ່ງໜຶ່ງຂອງ

ກຸ່ມເຫຼົ່ານີ້ ທີ່ພົບໃນການສຳຫຼວດ ປີ 2011-12, ອັດຕາການຈະເລີນພັນຈະຫຼຸດລົງຢ່າງໄວວາ, ເຊິ່ງອາດຈະຫຼຸດລົງໄວວາກວ່າທີ່ຄາດໄວ້ໃນການຄາດຄະເນປະຊາກອນ.

**ປະເດັນສຳຄັນທີ່ພົບຈາກການຄາດຄະເນປະຊາກອນ**

ໃນການຄາດຄະເນປະຊາກອນ ຂອງ ສປປ ລາວ ໄດ້ພົບຫຼາຍໆປະເດັນທີ່ສຳຄັນທີ່ມີຜົນຕໍ່ການວາງແຜນການພັດທະນາ. ປະເດັນຕ່າງໆເຫຼົ່ານີ້ ໄດ້ສະຫຼຸບສັງລວມດັ່ງລຸ່ມນີ້ກ່ອນຈະມີການອະທິບາຍ ລະອຽດເພີ່ມເຕີມແຕ່ລະປະເດັນຢ່າງລະອຽດ.

1. **ອັດຕາການເຕີບໂຕຂອງປະຊາກອນ** ຈະເພີ່ມຂຶ້ນຫຼາຍ, ບໍ່ວ່າການຄາດຄະເນນັ້ນຈະອີງໃສ່ຫຼັກການໃດກໍຕາມ. ໃນຊ່ວງໄລຍະ 20 ປີ ຈາກປີ 2015-2035, ອັດຕາການເຕີບໂຕປະຊາກອນສົມບູນ ຈະຢູ່ລະຫວ່າງ 2.2 ລ້ານ ຫາ 2.5 ລ້ານ, ຫຼື ເພີ່ມຂຶ້ນລະ ຫວ່າງ 33% ຫາ 37%. ໃນລະຫວ່າງ 35 ປີ, 2015-2050, ການຂະຫຍາຍຕົວຈະເພີ່ມຂຶ້ນລະຫວ່າງ 3.5 ລ້ານ ແລະ 4.0 ລ້ານ, ການເພີ່ມຂຶ້ນລະຫວ່າງ 52% ແລະ 59%.

2. ຈຳນວນ **ປະຊາກອນໃນເກນອາຍຸເຂົ້າໂຮງຮຽນ** ຈະມີການເໜັງຕີງເລັກນ້ອຍ, ແຕ່ໂດຍທົ່ວໄປແລ້ວຈະບໍ່ເພີ່ມຂຶ້ນ. ປະເດັນນີ້ເປັນຈຸດສຳຄັນທີ່ມີຜົນຕໍ່ການວາງແຜນ ທາງດ້ານການສຶກສາ, ເຊິ່ງຈະໄດ້ສົນທະນາລາຍລະອຽດຕື່ມອີກຂ້າງລຸ່ມນີ້.

3. **ການເພີ່ມຂຶ້ນຂອງປະຊາກອນໃນໄລຍະຜ່ານມາ** (population momentum) ຈະເປັນຕົວນຳພາໃຫ້ແກ່ການເຕີບໂຕ ປະຊາກອນໂດຍລວມ. ໃນຂະນະທີ່ປະຊາກອນໃນເກນອາຍຸເຂົ້າໂຮງຮຽນຈະບໍ່ເພີ່ມຂຶ້ນ, ປະຊາກອນໃນເກນອາຍຸເຮັດວຽກຈະເພີ່ມຂຶ້ນຢ່າງວ່ອງໄວ ແລະ ປະຊາກອນຜູ້ສູງອາຍຸຈະເພີ່ມຂຶ້ນໃນຄວາມໄວທີ່ຕໍ່າກວ່າ. ປະເດັນນີ້ສາມາດສັງເກດເຫັນ ຈາກການປ່ຽນແປງຮູບຮ່າງຂອງຮູບຊົງປີຣາມິດປະຊາກອນ - ຈາກຮູບຊົງປີຣາມິດທີ່ມີຖານກວ້າງ ກາຍມາເປັນຮູບຊົງຄ້າຍກະບອກຫຼາຍຂຶ້ນ (ເບິ່ງຮູບ 1).

4. ສປປ ລາວ ຈະໄດ້ຮັບຜົນປະໂຫຍດຈາກ**ການປັນຜົນປະຊາກອນ (ຜົນປະໂຫຍດທາງດ້ານປະຊາກອນ)** - ການເພີ່ມຂຶ້ນຂອງອັດຕາສ່ວນປະຊາກອນກຸ່ມອາຍຸເຮັດວຽກຕໍ່ປະຊາກອນທັງໝົດ - ໃນໄລຍະເວລາທັງໝົດ 45 ປີ ຈາກປະຈຸບັນນີ້ຫາປີ 2050.

5. ອັດຕາສ່ວນຜູ້ສູງອາຍຸ - ໝາຍເຖິງຜູ້ມີອາຍຸ 65 ປີ ຂຶ້ນໄປ - ຕໍ່ຈຳນວນປະຊາກອນທັງໝົດ ແມ່ນມີຈຳນວນໜ້ອຍໃນ ສປປ ລາວ - ເຊິ່ງຕໍ່າກວ່າທຸກໆປະເທດສະມາ

ສິກປະຊາຄົມອາຊຽນ. ການສູງໄວອັຍງບໍ່ແມ່ນປະເດັນບັນຫາຫຼັກຂອງ ສປປ ລາວ; ອັດຕາສ່ວນປະຊາກອນ ຜູ້ສູງອາຍຸຈະເລີ່ມເພີ່ມຂຶ້ນຫຼັງຈາກປີ 2020. ເຖິງແມ່ນວ່າມັນຈະເພີ່ມຂຶ້ນທົບເທົ່າຫຼັງຈາກນັ້ນ ຫາປີ 2050, ແຕ່ວ່າອັດຕາສ່ວນຜູ້ສູງອາຍຸໃນ ສປປ ລາວ ຈະຍັງຕໍ່າກ່ວາຈຳນວນປະຊາກອນຜູ້ສູງອາຍຸໃນປະຈຸບັນຂອງປະເທດໄທ.

**ຮູບພາບ 1: ໂຄງປະກອບອາຍຸປະຊາກອນ ປີ 2010 ແລະ 2050**




## ຜົນເສຍ ແລະ ຜົນປະໂຫຍດ ຂອງການເພີ່ມຂຶ້ນຂອງປະຊາກອນລາວ

ບໍ່ວ່າຈະໃຊ້ສົມມຸດຕິຖານອັນໃດກໍ່ຕາມ, ປະຊາກອນລາວຈະເພີ່ມຂັ້ນຢ່າງຕໍ່ເນື່ອງ, ອາດຈະເຖິງ 10 ລ້ານ ພາຍໃນປີ 2045. ສາມາດເວົ້າໄດ້ວ່າ ສປປ ລາວ ຈະໄດ້ຮັບຜົນປະໂຫຍດໃນຫຼາຍໆດ້ານ ຈາກການເພີ່ມຂຶ້ນຂອງຈຳນວນປະຊາກອນ. ຈຳນວນປະຊາກອນທີ່ສູງຂຶ້ນ ແລະ ໜາແໜ້ນຂຶ້ນອາດຈະເປັນເຫດຜົນໃຫ້ມີການສ້າງໂຄງລ່າງພື້ນຖານ ທີ່ຈຳເປັນຕໍ່ການ ຕົວຢ່າງເຊັ່ນ ການສ້າງຕາໜ່າງຖະໜົນຫົນທາງ. ແຕ່ວ່າມັນຈະສະໜອງແຫຼ່ງຊັບພະຍາກອນ ຫຼື ບໍ່ແມ່ນບໍ່ມີຄວາມແນ່ນອນ. ການເພີ່ມຂຶ້ນຢ່າງໄວວາຂອງປະຊາກອນ ພາ

[1] ຄວາມຈິງແລ້ວ, ບັນດາແນວໂນ້ມ ໃນກຸ່ມອາຍຸ 0-4 ປີ ໃນຊ່ວງຊຸມປີທຳອິດ ຂອງການຄາດຄະເນ ແມ່ນເປັນໜ້າປະຫຼາດໃຈ. ການຄາດຄະເນປານກາງ, ຈຳນວນ ປະຊາກອນກຸ່ມອາຍຸ 0-4 ປີ ລຸດລົງ 5.5% ໃນຊ່ວງລະຫວ່າງປີ 2010 ຫາປີ 2015, ເຖິງວ່າປະຊາກອນຍິງໃນໄວຈະເລີນພັນ (15-44ປີ) ໄດ້ເພີ່ມຂຶ້ນ 17%. ຈາກນັ້ນ ໃນຊ່ວງລະຫວ່າງປີ 2015 ຫາປີ 2020, ຈຳນວນ ປະຊາກອນກຸ່ມອາຍຸ 0-4 ປີ ເພີ່ມຂຶ້ນ 10%, ສອດຄ່ອງກັບການເພີ່ມຂຶ້ນ 12.6% ຂອງ ປະຊາກອນຍິງໃນໄວຈະເລີນພັນ. ຄວາມຄາດເຄື່ອນ ລະຫວ່າງ ແນວໂນ້ມຈຳນວນເດັກນ້ອຍ ແລະ ແນວໂນ້ມ ແມ່ຍິງໄວຈະເລີນພັນ ໃນຊ່ວງໄລຍະປີ 2010-15 ເກີດຂຶ້ນອາດເປັນຍ້ອນ ຫຼາຍໆປັດໃຈອື່ນທີ່ແຕກຕ່າງກັນ, ລວມທັງ ການຜິດພາດທາງດ້ານການນັບຈຳນວນເດັກນ້ອຍ ຫຼື ການເຂົ້າໃຈຜິດດ້ານອາຍຸ ຂອງແມ່ຍິງຜູ່ໃຫຍ່. ບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ, ມັນຈະເປັນການດີສຳລັບ ບັນດານັກວາງແຜນ ທີ່ຄວນຈະຄຳນຶງເຖິງຄວາມເປັນໄປໄດ້ ທີ່ວ່າ ຈຳນວນເດັກນ້ອຍ ໃນຊ່ວງໄລຍະປີ 2010-2015 ອາດຈະບໍ່ໄດ້ລຸດລົງເລີຍ.

ໃຫ້ການເຕີບໂຕທາງດ້ານເສດຖະກິດເພີ່ມຂຶ້ນໄວວາຕື່ມອີກບໍ່? ປະເດັນນີ້ແມ່ນອີງໃສ່ຫຼາຍໆປັດໄຈ, ໂດຍສະເພາະແມ່ນປັດໄຈທາງເສດຖະກິດທີ່ຈະສາມາດສ້າງວຽກເຮັດງານທຳ ທີ່ມີປະສິດທິຜົນ ເພື່ອຮອງຮັບການເພີ່ມຂຶ້ນຢ່າງວ່ອງໄວຂອງກຳລັງແຮງງານໄດ້ຫຼືບໍ່. ຖ້າໄດ້, ການເພີ່ມຂຶ້ນຂອງ ກຳລັງຊື້ພາຍໃນປະເທດຈະເປັນການກະຕຸ້ນໃຫ້ເສດຖະກິດ ມີການຂະຫຍາຍຕົວ. ເຖິງຢ່າງໃດກໍຕາມ, ການເພີ່ມຂຶ້ນຂອງປະຊາກອນທີ່ໄວວາ ອາດຈະບໍ່ສະໜອງເຫດຜົນຕື່ມສຳລັບການເພີ່ມ "ຄວາມໜາແໜ້ນ" ຂອງເຄືອຄ່າຍໂຮງຮຽນ, ແລະ ເຮັດໃຫ້ອັດຕາສ່ວນປະຊາກອນ ຈຳນວນຫຼາຍສາມາດເຂົ້າເຖິງໂຮງຮຽນ. ນີ້ແມ່ນຍ້ອນວ່າຈຳນວນເດັກນ້ອຍໃນເກນອາຍຸເຂົ້າໂຮງຮຽນ ຈະບໍ່ປ່ຽນແປງຫຼາຍ ຕາມທີ່ໄດ້ສະແດງໃຫ້ເຫັນແລ້ວ. ບັນດາຂໍ້ໂຕ້ແຍ່ງໃນການສ້າງໂຮງຮຽນເພີ່ມ - ເຊິ່ງໃນໂຮງຮຽນຫຼາຍແຫ່ງມີຈຳນວນນັກຮຽນໜ້ອຍ - ອາດຈະຕ້ອງໄດ້ມີການຊັ່ງຊາກັບເຫດຜົນຂອງການຍ້າຍເດັກນ້ອຍ ທີ່ຢູ່ຫ່າງໄກສອກຫຼີກ ມາຢູ່ໃກ້ກັບໂຮງຮຽນທີ່ມີຢູ່ແລ້ວດ້ວຍການເດີນທາງ ຫຼື ການສ້າງຫໍພັກໃນໂຮງຮຽນ.

**ຜົນປະໂຫຍດທາງດ້ານປະຊາກອນ ຂອງ ສປປ ລາວ (ການປັນຜົນທາງດ້ານປະຊາກອນ)**

ສປປ ລາວ ຈະໄດ້ຮັບຜົນປະໂຫຍດຈາກການປ່ຽນແປງ ທາງດ້ານໂຄງປະກອບປະຊາກອນ/ການປັນຜົນທາງດ້ານປະຊາກອນຕະຫຼອດຊ່ວງເວລາສີ່ສິບປີຂ້າງໜ້ານີ້. ແນວຄວາມຄິດຂອງການປັນຜົນທາງດ້ານປະຊາກອນກໍບໍ່ມີຫຍັງຊັບຊ້ອນຄືເຊິ່ງໝາຍເຖິງ ປະຊາກອນໃນໄວເຮັດວຽກຈະເພີ່ມຂຶ້ນຢ່າງໄວວາ ແລະ ໄວກວ່າປະຊາກອນ "ເອື່ອຍອີງ" (ເຊິ່ງແມ່ນເດັກນ້ອຍ ແລະ ຜູ້ສູງອາຍຸ), ເຫດຜົນຫຼັກແມ່ນເນື່ອງຈາກການຫຼຸດລົງຂອງອັດຕາ ການຈະເລີນພັນ, ເຊິ່ງເຮັດໃຫ້ອັດຕາສ່ວນຂອງປະຊາກອນເດັກນ້ອຍທຽບໃສ່ປະຊາກອນທັງໝົດຫຼຸດລົງ. ດ້ວຍເຫດນັ້ນຜົນຜະລິດຂອງກຸ່ມຄົນໃນໄວເຮັດວຽກຍົກຕົວຢ່າງສິບຄົນ ແມ່ນຕ້ອງໄດ້ດູແລລ້ຽງດູປະຊາກອນໃນກຸ່ມເອື່ອຍອີງ ໜ້ອຍລົງກວ່າແຕ່ກ່ອນ. ນີ້ເປັນແນວຄວາມຄິດແບບງ່າຍໆ, ຖືກຕ້ອງຕາມຄວາມເປັນຈິງແຕ່ຈຳເປັນຕ້ອງຮັບປະກັນ ທາງດ້ານຄຸນະພາບໃນຫຼາຍທາງ. ປະເດັນທຳອິດ, ບໍ່ໝາຍວ່າກຸ່ມປະຊາກອນໃນໄວເຮັດວຽກ ບໍ່ໄດ້ເຮັດວຽກໝົດທຸກຄົນ; ບາງຄົນບໍ່ສາມາດເຮັດວຽກໄດ້ ແລະ ບາງຄົນຊອກວຽກບໍ່ໄດ້. ນອກຈາກນັ້ນ, ປະຊາກອນ "ເອື່ອຍອີງ" ບາງຈຳນວນຊ້ຳພັດໄດ້ເຮັດວຽກ; ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ຜູ້ສູງອາຍຸຈຳນວນຫຼາຍ ໂດຍສະເພາະທີ່ຢູ່ເຂດຊົນນະບົດ ແມ່ນຍັງສືບຕໍ່ເຮັດວຽກເທົ່າທີ່ເຂົາເຈົ້າເຮັດໄດ້. ປະເດັນທີ່ສອງ, ການເພີ່ມຂຶ້ນຂອງ ອັດຕາສ່ວນແຮງງານ ຕໍ່ກັບອັດຕາເອື່ອຍອີງຈະມີຜົນປະໂຫຍດຕໍ່ກັບ ການພັດທະນາກໍຕໍ່ເມື່ອຢ່າງໜ້ອຍ ປະເທດຊາດສາມາດຮັກສາ ແລະ ໂດຍສະເພາະຕ້ອງເພີ່ມປະສິດທິພາບຂອງແຮງງານ ທີ່ເຂົ້າໃນຕະຫຼາດແຮງງານງານໂດຍຜ່ານນະໂຍບາຍການສຶກສາແລະ ການ

ເຝິກອົບຮົມທີ່ເໝາະສົມ ແລະ ການຂະຫຍາຍໂອກາດການຈ້າງງານທີ່ມີປະສິດທິພາບ.

ບັນຫາຕ່າງໆທີ່ກ່າວມານັ້ນ, ເຖິງຢ່າງໃດ, ມັນກໍເປັນການຈະແຈ້ງແລ້ວວ່າ ທ່າອ່ຽງຂອງອັດຕາສ່ວນເອື່ອຍອີງ (ຈໍານວນປະຊາກອນອາຍຸ 0-14 ປີ ບວກໃຫ້ຈໍານວນປະຊາກອນອາຍຸ 65 ປີ ຂຶ້ນໄປຫານໃຫ້ຈໍານວນປະຊາກອນ ອາຍຸ 15-64 ປີ) ແມ່ນມີຜົນດີ ທີ່ເອື້ອອໍານວຍຕໍ່ການພັດທະນາໃນປະເທດລາວ. ແນວໂນ້ມຂອງອັດຕາສ່ວນດັ່ງກ່າວ ໃນການຄາດຄະເນລະດັບປານກາງ ໄດ້ສະແດງໃນຕາຕະລາງລຸ່ມນີ້:

| ປີ | ອັດຕາ ເອື່ອຍອີງ ກຸ່ມເດັກນ້ອຍ | ອັດຕາ ເອື່ອຍອີງ ກຸ່ມຜູ້ສູງອາຍຸ | ອັດຕາ ເອື່ອຍອີງ ທັງໝົດ |
|---|---|---|---|
| 2010 | 0.69 | 0.07 | **0.75** |
| 2015 | 0.56 | 0.06 | **0.62** |
| 2020 | 0.49 | 0.06 | **0.55** |
| 2025 | 0.46 | 0.06 | **0.52** |
| 2030 | 0.44 | 0.07 | **0.51** |
| 2035 | 0.40 | 0.08 | **0.49** |
| 2040 | 0.36 | 0.09 | **0.45** |
| 2045 | 0.33 | 0.10 | **0.43** |
| 2050 | 0.31 | 0.12 | **0.43** |

ທ່າອ່ຽງນີ້ ໃນການຄາດຄະເນລະດັບສູງ ແລະ ຕໍ່າແມ່ນບໍ່ມີຄວາມແຕກຕ່າງກັນຫຼາຍ. ຍົກຕົວຢ່າງ, ໃນການຄາດຄະເນລະດັບສູງ, ອັດຕາເອື່ອຍອີງໃນ ປີ 2040 ແມ່ນສູງກ່ວາໜ້ອຍໜຶ່ງ (0.38, .09 ແລະ 0. 47 ຕາມລໍາດັບ) ແລະ ໃນການຄາດຄະເນລະດັບຕໍ່າແມ່ນຕໍ່າກ່ວາ ໜ້ອຍໜຶ່ງ (0.35, 0.09 ແລະ 0.44 ຕາມ ລໍາດັບ).

ສຸມໃສ່ການຄາດຄະເນລະດັບປານກາງ, ອັດຕາການເອື່ອຍອີງ ແມ່ນຫຼຸດລົງຢ່າງຫຼວງຫຼາຍໃນໄລຍະລະຫວ່າງ ປີ 2010 ຫາ 2015; ຫຼັງຈາກປີ 2015, ແມ່ນຄາດວ່າ ອັດຕາດັ່ງກ່າວຈະສືບຫຼຸດລົງຕື່ມອີກເຖິງ 30%. ຖ້າຫາກມີການລົງທຶນທີ່ເໝາະສົມ ເຂົ້າໃນການສຶກສາ ແລະ ການຝຶກອົບຮົມ ແລະ ການຂະຫຍາຍໂອກາດ ໃນການເຂົ້າຫາວຽກເຮັດງານທໍາ, ການປັນຜົນ ທາງດ້ານປະຊາກອນດັ່ງກ່າວຈະມີຜົນ ໃນການຊຸກຍູ້ອັນໃຫຍ່ຫຼວງໃຫ້ແກ່ການເພີ່ມຄວາມໄວ ໃນການເພີ່ມຂຶ້ນຂອງຜົນຜະລິດຕໍ່ຫົວຄົນ ແລະ ລາຍຮັບ.

ຫຼັງຈາກປີ 2050, ອັດຕາການເອື່ອຍອີງຈະຄ່ອຍໆເພີ່ມຂຶ້ນ, ເນື່ອງຈາກການເພີ່ມຂຶ້ນຂອງອັດຕາສ່ວນເອື່ອຍອີງໃນກຸ່ມຜູ້ສູງອາຍຸ ທີ່ມີຈັງວະເພີ່ມຂຶ້ນ. ເມື່ອເຖິງເວລານັ້ນ, ສປປ ລາວ ຈະເປັນປະເທດທີ່ຮັ່ງມີຂຶ້ນກວ່າທີ່ເປັນຢູ່ປະຈຸບັນນີ້ຫຼາຍ, ແລະ ດ້ວຍເຫດນັ້ນ ສປປ ລາວ ກໍຈະມີຊັບພະຍາກອນພຽງພໍ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານປະຊາກອນຜູ້ສູງອາຍຸ.

# ກຳລັງແຮງງານ

**ອັດຕາສ່ວນການມີສ່ວນຮ່ວມຂອງກຳລັງແຮງງານເພດຍິງ ແມ່ນສູງຫຼາຍ – ສູງເກືອບເທົ່າກັບເພດຊາຍ**

ອັດຕາການເຂົ້າຮ່ວມດ້ານກຳລັງແຮງ ຂອງແມ່ຍິງ ແລະ ຜູ້ຊາຍ ໃນ ສປປ ລາວ ແມ່ນສູງຫຼາຍ. ອັດຕາກຳລັງແຮງງານທີ່ມີສ່ວນຮ່ວມເພດຍິງຕໍ່າກວ່າ ເພດຊາຍພຽງໜ້ອຍດຽວ. ຂໍ້ມູນດັ່ງກ່າວນີ້ ສ້າງຄວາມໜ້າປະຫຼາດໃຈສົມຄວນ ເນື່ອງຈາກວ່າອັດຕາຈະເລີນພັນໃນປະເທດລາວ ແມ່ນສູງກ່ວາທຸກໆປະເທດສະມາຊິກອາຊຽນ ຍົກເວັ້ນປະເທດຟີລິບປິນ, ສະນັ້ນຈຶ່ງມີການຄາດວ່າ ແມ່ຍິງຈຳນວນຫຼວງຫຼາຍແມ່ນຕ້ອງໄດ້ຖອນຕົວອອກຈາກ ກຸ່ມກຳລັງແຮງງານເພື່ອເບິ່ງແຍງລູກ. ເຖິງຢ່າງໃດກໍຕາມ, ຂໍ້ມູນສາມາດສ່ອງແສງໃຫ້ເຫັນໂດຍບໍ່ຕ້ອງສົງໄສວ່າ ອົງປະກອບຫຼັກຂອງເສດຖະກິດລາວ ແມ່ນກະສິກຳແບບກຸ້ມຕົນເອງ, ແລະ ໃນຊຸມຊົນຊາວກະສິກຳແບບກຸ້ມຕົນເອງນັ້ນ ໂດຍປົກະຕິແລ້ວ ແມ່ນທັງຍິງ ແລະ ຊາຍຕ້ອງເຮັດວຽກ, ຢ່າງນ້ອຍເຖິງບໍ່ໄດ້ເຮັດເຕັມເວລາກໍແມ່ນຕ້ອງເຮັດວຽກສ່ວນໃດສ່ວນໜຶ່ງ. ປະສິດຕິພາບຂອງຜົນຜະລິດ ຂອງແມ່ຍິງໃນເວລາທີ່ຕ້ອງເຮັດວຽກກະສິກຳ ພ້ອມທັງລ້ຽງລູກໄປນຳແມ່ນສູງ ຫຼື ບໍ່, ນັ້ນແມ່ນເປັນອີກຄຳຖາມໜຶ່ງທີ່ຕ້ອງໄດ້ພິຈາລະນາ.

ເຖິງຢ່າງໃດກໍຕາມ, ອັດຕາກຳລັງແຮງງານທີ່ມີສ່ວນຮ່ວມຂອງແມ່ຍິງທີ່ສູງ ບໍ່ແມ່ນພຽງແຕ່ຢູ່ໃນຂົງເຂດກະສິກຳ ແບບກຸ້ມຕົນເອງເທົ່ານັ້ນ. ຢູ່ໃນຂົງເຂດຕົວເມືອງ, ເຖິງວ່າ ອັດຕາກຳລັງແຮງງານທີ່ມີສ່ວນຮ່ວມແມ່ຍິງ ຈະບໍ່ສູງເທົ່າກັບຢູ່ເຂດຊົນນະບົດ, ແຕ່ມັນກໍສູງເຖິງ 90% ສຳລັບທັງໝົດຊ່ວງອາຍຸ 25-29 ປີ ຫາ 45-49 ປີ (ການສຳຫຼວດກຳລັງແຮງງານປີ 2012, ຮູບ 7.4). ຕົວເລກນີ້ແມ່ນສູງຫຼາຍທຽບໃສ່ບັນດາປະເທດອື່ນໆໃນທະວີບອາຊີ ແລະ ທຽບໃສ່ປະເທດສະມາຊິກອາຊຽນອື່ນໆ. ໃນການປະເມີນຕົວເລກດັ່ງກ່າວນີ້, ຈຳເປັນຕ້ອງມີການສຶກສາ ໂຄງປະກອບການຈ້າງງານແມ່ຍິງໃນຂົງເຂດຕົວເມືອງຕື່ມອີກ. ສັງເກດເຫັນວ່າຢູ່ເຂດຕົວເມືອງ, ຫຼາຍກວ່າໜຶ່ງສ່ວນສາມ (37%) ຂອງແມ່ຍິງທີ່ເຮັດວຽກແມ່ນຢູ່ໃນຂົງເຂດກະສິກຳ, ໃນຂະນະທີ່ 15% ເຮັດວຽກໃນຂົງເຂດອຸດສະຫະກຳ ແລະ ເກືອບເຄິ່ງໜຶ່ງເຮັດວຽກ ໃນຂົງເຂດການບໍລິການທີ່ຫຼາກຫຼາຍ, ໂດຍສະເພາະ (28%) ແມ່ນການຄ້າຂາຍທັງຍົກ ແລະ ຍ່ອຍ ແລະ ການສ້ອມແປງ. ຢູ່ໃນອາຊີບ ປະເພດ "ຜູ້ເຮັດວຽກບໍລິການ ແລະ ຜູ້ຂາຍເຄື່ອງຕາມຮ້ານຄ້າ ແລະ ຕະຫຼາດ" ແມ່ຍິງເຮັດວຽກສ່ວນຫຼາຍ (82%) ແມ່ນຈ້າງງານຕົນເອງ ຫຼື ເຮັດວຽກໃຫ້ຄອບຄົວໂດຍບໍ່ມີຄ່າຈ້າງ, ວຽກງານຫັດຖະກຳ ແລະ ເຮັດວຽກທີ່ກ່ຽວຂ້ອງກັບການຄ້າຂາຍ,

ການປູກຝັງ ແລະ ການໃຊ້ເຄື່ອງຈັກ (ເປັນປະເພດຫຼັກ ສໍາລັບການຈ້າງງານໃນໂຮງງານ), 51% ແມ່ນຜູ້ຈ້າງງານຕົນເອງ ຫຼື ເຮັດວຽກໃຫ້ຄອບຄົວ ໂດຍບໍ່ມີຄ່າຈ້າງ. (ຕົວເລກເຫຼົ່ານີ້ ແມ່ນສໍາລັບທົ່ວປະເທດ, ບໍ່ແມ່ນສໍາລັບເຂດຕົວເມືອງເທົ່ານັ້ນ). ໃນທົ່ວປະເທດ, ແລະລວມທັງໃນເຂດຕົວເມືອງ, ແຮງງານແມ່ຍິງສ່ວນຫຼາຍ ແມ່ນຢູ່ໃນຂະແໜງການບໍ່ເປັນທາງການ, ເຮັດວຽກໃຫ້ຕົນເອງ ຫຼື ຄອບຄົວໂດຍບໍ່ໄດ້ຮັບຄ່າຈ້າງ. ເຖິງວ່າເວລາໃນການເຮັດວຽກ ໂດຍສະເລ່ຍແລ້ວອາດຂ້ອນຂ້າງຍາວ, ແຕ່ວຽກເຫຼົ່ານີ້ອາດເຮັດໃຫ້ແມ່ຍິງສາມາດປະສົມປະສານ ລະຫວ່າງການລ້ຽງລູກ ແລະ ເຮັດວຽກໄດ້ງ່າຍຂຶ້ນ.

ອັດຕາການຫວ່າງງານໃນປະເທດລາວ ແມ່ນຂ້ອນຂ້າງຕໍ່າ (1.9% ໃນປີ 2010), ແຕ່ຂໍ້ມູນນີ້ບໍ່ໄດ້ເປັນການສະທ້ອນເຖິງ ລະບົບເສດຖະກິດທີ່ດີ, ແຕ່ເປັນການສະແດງໃຫ້ເຫັນວ່າແນວຄວາມຄິດຂອງການຫວ່າງງານ ອາດບໍ່ມີຄວາມກ່ຽວຂ້ອງໃນເສດຖະກິດ ທີ່ແຮງງານສ່ວນຫຼາຍ ແມ່ນກະສິກໍາແບບກຸ້ມຕົນເອງ ແລະ ການຈ້າງງານດ້ວຍຕົນເອງ, ເຊິ່ງໃນນີ້ແມ່ນລວມທັງຢູ່ໃນເຂດຕົວເມືອງ. ອັດຕາການຫວ່າງງານ ໃນເຂດຕົວເມືອງແມ່ນມີຄວາມສໍາຄັນຫຼາຍກ່ວາ ອັດຕາການຫວ່າງງານໃນເຂດຊົນນະບົດ, ເຊິ່ງອັດຕາການຫວ່າງງານ ໃນເຂດຕົວເມືອງແມ່ນ 3.2%. ຄືກັບເກືອບທຸກໆປະເທດ, ອັດຕາການຫວ່າງງານໃນເຂດຕົວເມືອງ ແມ່ນສູງທີ່ສຸດສໍາລັບປະຊາກອນ ກຸ່ມອາຍຸ 15-19 ປີ ແລະ 20-24 ປີ (6.6% ແລະ 7.0% ຕາມລໍາດັບ), ເຊິ່ງເປັນເກນອາຍຸ ທີ່ບັນດາຊາວໜຸ່ມພະຍາຍາມເລີ່ມຊອກຫາວຽກເຮັດງານທໍາ, ແລະ ອັດຕາຫວ່າງງານຕໍ່າ ລົງຫຼາຍໃນກຸ່ມອາຍຸ 25-29 ປີ (2.7%) (ການສໍາຫຼວດກໍາລັງແຮງງານປີ 2010: 101-110).

ສະນັ້ນ, ມັນສາມາດເວົ້າໄດ້ວ່າ ສປປ ລາວ ແມ່ນໄດ້ນໍາໃຊ້ ທ່າແຮງທາງດ້ານຊັບພະຍາກອນມະນຸດຢ່າງເຕັມທີ່ ນີ້ຄວາມໝາຍຄວາມວ່າຜູ້ທີ່ມີສາມາດເຮັດວຽກ ແມ່ນໄດ້ຮັບການຈ້າງງານເກືອບທັງໝົດ. ບັນຫາແມ່ນຢູ່ບ່ອນວ່າຜົນຜະລິດຂອງວຽກງານສ່ວນຫຼາຍ ທີ່ພວກເຂົາເຮັດແມ່ນຍັງຕໍ່າ. ການເພີ່ມລະດັບຜົນຜະລິດ ດ້ວຍການປ່ຽນແປງໂຄງສ້າງເສດຖະກິດຫັນມາສູ່ບັນດາຂະແໜງການ ທີ່ໃຫ້ຜົນຜະລິດຫຼາຍກ່ວາ, ແລະ ຍົກລະດັບການສຶກສາ ແລະ ການຝຶກອົບຮົມໃຫ້ກັບຜູ້ທີ່ຢູ່ໃນຂະບວນການຜະລິດ, ຫຼື ກໍາລັງແຮງງານທັງໝົດ, ນີ້ລ້ວນແຕ່ເປັນສິ່ງທ້າທາຍທີ່ສໍາຄັນ.

### ຜົນຜະລິດຂອງການຈ້າງງານໃນຂະແໜງກະສິກໍາ ແມ່ນຍັງຕໍ່າກວ່າ ໃນຂະແໜງອື່ນໆ

ສໍາລັບກໍາລັງແຮງງານທັງໝົດ ຂອງປະເທດລາວ, 71% ເຮັດວຽກໃນຂະແໜງກະສິກໍາ, 8% ໃນຂະແໜງ ອຸດສະຫາກໍາ ແລະ 20% ໃນຂະແໜງບໍລິການ. ການຄາດຄະເນຜົນຜະລິດທັງໝົດ ຂອງແຕ່ລະຂະແໜງແບບບໍ່

ລະອຽດ ສາມາດເຮັດໄດ້ໂດຍການສົມທຽບການກະຈາຍຜົນຜະລິດຕະພັນພາຍໃນປະເທດທີ່ມາຈາກແຕ່ລະຂະແໜງການ ໃສ່ກັບການກະຈາຍກຳລັງແຮງງານ ໃນຂະແໜງການຕ່າງໆ. ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນຄວາມແຕກຕ່າງ ຢ່າງເຫັນໄດ້ຊັດເຈນຂອງຜະລິດຕະພັນຕໍ່ຫົວຄົນໃນແຕ່ລະຂະແໜງທີ່ແຕກຕ່າງກັນ: ຜະລິດຕະພັນຕໍ່ຫົວຄົນໃນຂະແໜງອຸດສະຫະກຳ ສູງກ່ວາຂະແໜງກະສິກຳເກືອບ 8 ເທົ່າ, ແລະ ຂະແໜງບໍລິການສູງກ່ວາຂະແໜງກະສິກຳເກືອບ 5 ເທົ່າ. ວິທີການໜຶ່ງ ທີ່ຈະເພີ່ມຜົນຜະລິດໃຫ້ກັບເສດຖະກິດໄດ້ ແມ່ນອາດຈະຕ້ອງດຶງເອົາຜູ້ເຮັດວຽກຂະແໜງກະສິກຳ ໄປເຮັດວຽກໃນຂະແໜງການອື່ນ; ແຕ່ເນື່ອງຈາກວ່າຜູ້ເຮັດວຽກໃນຂະແໜງກະສິກຳນັ້ນ ໄດ້ກວມເອົາກຳລັງແຮງງານໃນອັດຕາສ່ວນທີ່ຫຼາຍກວ່າໝູ່, ສະນັ້ນການຈະເພີ່ມຜົນຜະລິດ ໃຫ້ກັບເສດຖະກິດນັ້ນແມ່ນຕ້ອງເປັນໄປຢ່າງຊ້າໆ.

**ອັດຕາສ່ວນ ຂອງຜະລິດຕະພັນພາຍໃນປະເທດ ແລະ ຂອງການຈ້າງງານ ໃນແຕ່ລະຂະແໜງ, ໃນປີ 2010**

| ຂະແໜງການ | ການຈ້າງງານ ('000) | ຜະລິດຕະພັນພາຍ ໃນ ປະເທດ (ຕື້ກີບ) | ຜົນຜະລິດຕໍ່ຫົວຄົນ (ຕື້ກີບ) |
|---|---|---|---|
| ກະສິກຳ * | 2,155 | 16,056 | 7.5 |
| ອຸດສະຫະກຳ ** | 251 | 14,657 | 58.4 |
| ການບໍລິການ | 610 | 22,227 | 36.4 |
| **ລວມ** | **3,016** | **52,940** | **17.6** |

*ລວມທັງຂະແໜງປ່າໄມ້ ແລະ ການປະມົງ
**ລວມທັງຂະແໜງບໍ່ແຮ່ ແລະ ກໍ່ສ້າງ

ການເຕີບໂຕຂອງ ເສດຖະກິດໃນຊ່ວງສິບປີຜ່ານມານີ້ໄດ້ນຳໄປສູ່ການປ່ຽນແປງ ອັດຕາສ່ວນການ ຈ້າງງານໃນແຕ່ລະຂະແໜງການ, ເຊິ່ງໃນນັ້ນ ສັດສ່ວນຂອງຂະແໜງກະສິກຳໄດ້ຫຼຸດລົງຈາກ 78.5% ອີງຕາມຂໍ້ມູນການສຳຫຼວດພົນລະເມືອງ ປີ 2005 ຫາ 71% ໃນ ປີ 2010, ຂະແໜງອຸດສະຫະກຳເພີ່ມຂຶ້ນ ຈາກ 4.8% ຫາ 8.3%, ແລະ ຂະແໜງບໍລິການເພີ່ມຂຶ້ນຈາກ 16.7% ຫາ 20.2% ໃນຊ່ວງໄລຍະເວລາດຽວກັນ. ເຖິງຢ່າງໃດກໍຕາມ, ຂະແໜງກະສິກຳຍັງຈະສືບຕໍ່ ກວມເອົາກຳລັງແຮງງານຫຼາຍກວ່າເຄິ່ງໜຶ່ງ ຂອງກຳລັງແຮງງານທັງໝົດຢ່າງໜ້ອຍໃນອີກສິບປີຂ້າງໜ້າ, ແລະ ອາດຈະແກ່ຍາວເຖິງສອງທົດສະວັດ; ເພາະສະນັ້ນ ເພື່ອເຮັດໃຫ້ຄວາມໄວໃນການຂະຫຍາຍຕົວດ້ານເສດຖະກິດ ມີຄວາມໝັ້ນ

ຄືງນັ້ນ, ມັນຍັງມີຄວາມສຳຄັນຫຼາຍທີ່ຈະຕ້ອງເພີ່ມຜົນຜະລິດ ໃນຂະແໜງກະສິກຳໃຫ້ສູງຂຶ້ນ, ທັງໃນກະສິກຳເພື່ອການຄ້າ ແລະ ກະສິກຳແບບກຸ້ມຕົນເອງ.

**ສປປ ລາວ ມີປະຊາກອນກະແຈກກະຈາຍທີ່ສຸດໃນອາຊຽນ.**

ການກະແຈກກະຈາຍຂອງປະຊາກອນ ແມ່ນມີເຫດຜົນຂອງມັນ. ຄວາມໜາແໜ້ນຂອງພົນລະເມືອງປາກົດວ່າບໍ່ຕ່ຳຫຼາຍ ເມື່ອທຽບໃສ່ເນື້ອທີ່ດິນປູກຝັງ. ສປປ ລາວ ມີເນື້ອທີ່ກະສິກຳ 1.62 ລ້ານເຮັກຕາ (ພຽງແຕ່ 7% ຂອງເນື້ອທີ່ທັງໝົດ) ລວມທັງເນື້ອທີ່ດິນປູກຝັງ 1.43 ລ້ານເຮັກຕາ, ໃນນັ້ນ 86% ແມ່ນໃຊ້ສຳລັບການປູກພືດຕາມລະດູການ ປີ 2010 -11. (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ, ໜ້າ 11). ສະນັ້ນ ດິນປູກຝັງ 1.1 ເຮັກຕາ ຕໍ່ຄອບຄົວ (ໃຊ້ວິທີການຄິດໄລ່ໂດຍເອົາຂະໜາດຄົວເຮືອນ ແມ່ນ 5.2), ແລະ ຖ້າບໍ່ນັບພົນລະເມືອງໃນເຂດຕົວເມືອງເຂົ້າໃນການຄິດໄລ່ເນື້ອທີ່ດິນ ປູກຝັງຕໍ່ຄົວເຮືອນ ຫຼາຍກວ່ານັ້ນຄືປະມານ 1.7 ເຮັກຕາ. ຕາມແຜນທີ່ວາງໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 7, ໜ້າ 20, ສະແດງໃຫ້ເຫັນວ່າຢູ່ເກືອບທົ່ວປະເທດ, ໂດຍສະເພາະເຂດພູສູງ ແລະ ເຂດຫ່າງໄກສອກຫຼີກ, ແມ່ນມີດິນປູກຝັງໜ້ອຍກວ່າ 1 ເຮັກຕາ ຕໍ່ຄົວເຮືອນ. [ການຄາດຄະເນນີ້ ອາດຍັງບໍ່ທັນພິຈາລະນາເອົາເຂດ ທີ່ຍັງມີຄວາມສ່ຽງຕໍ່ລະເບີດບໍ່ທັນແຕກ (UXOs)]. ລັດຖະບານໄດ້ຍົກຍ້າຍເກືອບ 900 ບ້ານ ໃນສິບປີຜ່ານມາ, ລວມທັງ ໜຶ່ງໃນຫ້າຂອງຄອບຄົວທີ່ຢູ່ເຂດພູສູງ. (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ, ໜ້າ 31). ຖ້າຫາກມີການຍົກຍ້າຍປະຊາຊົນເຂດພູສູງ ແລະ ເຂດຫ່າງໄກສອກຫຼີກຕື່ມອີກ, ການຂາດແຄນທີ່ດິນທີ່ສາມາດ ປູກຝັງທີ່ຍັງບໍ່ໄດ້ຈັບຈອງຈະບໍ່ເປັນບັນຫາບໍ? ນອກຈາກນັ້ນ, ມັນອາດຈະມີບັນຫາໃນການ ຄອບຄອງທີ່ດິນ ແລະ ການລົງທະບຽນທີ່ດິນຕາມມາ, ພ້ອມທັງບັນຫາອື່ນໆທີ່ໄດ້ກ່າວໄວ້ ໃນບົດລາຍງານເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາ (ໜ້າ 31).

ພົນລະເມືອງໃນຊົນນະບົດ ແມ່ນເກືອບຈະຢຸດການຂະຫຍາຍຕົວແລ້ວ, ແລະ ຖ້າການຄາດຄະເນປະຊາກອນຂອງ ອົງການສະຫະປະຊາຊາດກ່ຽວກັບ ການຂະຫຍາຍຕົວ ຂອງຕົວເມືອງຖືກຕ້ອງ (United Nations Population Division, 2004), ຄາດວ່າປະຊາກອນໃນເຂດຊົນນະບົດ ຈະບໍ່ຂະຫຍາຍຕົວຕື່ມອີກ. ເວົ້າອີກແນວໜຶ່ງວ່າ ການເພີ່ມຂຶ້ນຕາມທຳມະຊາດຂອງພົນລະເມືອງ ຊົນນະບົດທັງໝົດ (ເຊິ່ງຍັງຢູ່ໃນລະດັບສູງ) ແມ່ນຄາດວ່າຈະຍ້າຍເຂົ້າມາຢູ່ໃນບັນດາຕົວເມືອງ.

ຂະໜາດຂອງປະຊາກອນໃຫຍ່ເທົ່າໃດ ທີ່ ສປປ ລາວ ຈະສາມາດຮອງຮັບໄດ້? ຄຳຖາມນີ້ບໍ່ສາມາດທີ່ຈະຕອບ ໄດ້ຢ່າງແນ່ນອນ,

ເນື່ອງຈາກວ່າເມື່ອຂະແໜງກະສິກຳ ບໍ່ສາມາດຮອງຮັບ ຄວາມຕ້ອງການອັນສຳຄັນຂອງພົນລະເມືອງໄດ້ອີກຕໍ່ໄປ, ຂະໜາດຂອງພົນລະເມືອງທີ່ເປັນໄປໄດ້ໃນ ການຮອງຮັບແມ່ນມີຂອບເຂດຄວາມເປັນ ໄປໄດ້ທີ່ກ້ວາງຫຼາຍ (ຕົວຢ່າງ ໃນກໍລະນີ ປະ ເທດສິງກະໂປ). ເຖິງຢ່າງໃດກໍຕາມປະເທດລາວ ຍັງບໍ່ຢູ່ໃນຖານະທີ່ຈະແຂ່ງຂັນກັບສາກົນໄດ້ ໃນການຜະລິດສິນຄ້າ ແລະ ຜະລິດ ຕະພັນອື່ນໆທີ່ບໍ່ແມ່ນກະສິກຳ, ແລະ ນີ້ເປັນ ການເຕືອນໃຫ້ເຫັນເຖິງຄວາມຕ້ອງການໃນ ການລົງທຶນອັນຫຼວງຫຼາຍໃສ່ການສຶກສາ ແລະ ການຝຶກອົບຮົມ ເພາະມັນຈະເປັນ ການສ້າງຄວາມໝັ້ນຄົງໃຫ້ແກ່ຕົວເມືອງຂະໜາດ ໃຫຍ່ທີ່ຈະ ເປັນຕົວຂັບເຄື່ອນເສດຖະກິດໃນອານາຄົດ.

## ທ່າອ່ຽງທາງດ້ານປະຊາກອນ ແລະ ຄຸນະພາບດ້ານຊັບພະຍາກອນມະນຸດ

**ການສຶກສາ – ເປົ້າໝາຍບັນລຸການສຶກສາຂັ້ນປະຖົມຢ່າງທົ່ວເຖິງ ແມ່ນຍັງຢູ່ໄກຈາກຄວາມເປັນຈິງ, ຖ້າວັດແທກ ໂດຍການທີ່ເດັກນ້ອຍທຸກຄົນຮຽນຈົບຊັ້ນປະຖົມ ແລະ ສາມາດຮູ້ໜັງສື ແລະ ນຳໃຊ້ໄດ້ຢ່າງແທ້ຈິງ**

ສປປ ລາວ ຍັງເປັນປະເທດທີ່ຢູ່ນຳຫຼັງບັນດາປະເທດອາຊຽນ ໃນການບັນລຸເປົ້າໝາຍການສຶກສາຂັ້ນປະຖົມຢ່າງທົ່ວເຖິງ ຖ້າວັດແທກໂດຍອັດຕາສ່ວນເດັກນ້ອຍທີ່ຮຽນ ຈົບຊັ້ນປະຖົມ. ຈາກທັງສອງແຫຼ່ງຂໍ້ມູນຄືການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2011-12 (ຕາຕະລາງ ED.4) ແລະ ສະຖິຕິຂອງກະຊວງສຶກສາທິການ ແລະ ກິລາໄດ້ສະແດງໃຫ້ເຫັນອັດຕາການເຂົ້າຮຽນສຸດ ທິຊັ້ນປະຖົມແມ່ນຂ້ອນຂ້າງສູງຢູ່ໃນລະດັບ 85%, ແຕ່ເດັກນ້ອຍເປັນຈຳນວນຫຼາຍຮຽນບໍ່ຈົບຊັ້ນປະຖົມ, ແລະອອກໂຮງຮຽນໂດຍທີ່ຍັງ ຮຽນບໍ່ເຖິງຂັ້ນສາມາດນຳໃຊ້ຄວາມຮູ້ດັ່ງກ່າວ ໃຫ້ເປັນປະໂຫຍດ ແລະ ໃຊ້ການໄດ້ ໃນຊີວິດປະຈຳວັນ. ສະຖິຕິຂອງກະຊວງສຶກສາທິການ ແລະ ກິລາໄດ້ສະແດງ ໃຫ້ເຫັນວ່າອັດຕາລອດເຫຼືອເຖິງຊັ້ນ ປ5 ຈາກໂຮງຮຽນປະຖົມທັງໝົດແມ່ນດີຂຶ້ນຈາກພຽງແຕ່ 48% ໃນປີ 1992 ເປັນ 70% ໃນປີ 2012. ເຖິງຈະມີຄວາມຄືບໜ້ານີ້, ຕົວເລກດັ່ງກ່າວ ຍັງຕ່ຳທີ່ສຸດໃນຂົງເຂດພາກພື້ນນີ້. **ອັດຕາສ່ວນຂອງຜູ້ຮຽນຈົບຊັ້ນ** ປ5 ແມ່ນຕ່ຳກ່ວາໜ້ອຍໜຶ່ງ - ຄື 67%. ການເຂົ້າຮຽນປີທຳອິດເປັນປີທີ່ສຳຄັນທີ່ສຸດ, ເຊິ່ງມີອັດຕາການອອກໂຮງຮຽນສູງທີ່ສຸດ. ອີງໃສ່ຂໍ້ມູນຂອງກະຊວງສຶກສາທິການ ແລະ ກິລາ, ໃນຈຳນວນເດັກນ້ອຍເກນອາຍຸເຂົ້າຮຽນປະຖົມ, ມີປະມານ 5% ບໍ່ເຄີຍໄປລົງທະບຽນເຂົ້າຮຽນ ແລະ ບໍ່ເຄີຍໄປໂຮງຮຽນ, ແລະ ມີປະມານ

10% ໄປລົງທະບຽນແຕ່ບໍ່ໄປຂຶ້ນຫ້ອງຮຽນ (ບົດລາຍງານເປົ້າໝາຍ ສະຫັດສະຫວັດເພື່ອການພັດທະນາ, ປີ 2013, ໜ້າ 57).

ອັດຕາການລອດເຫຼືອຈົນເຖິງຊັ້ນ ປ໋5 ແມ່ນຕໍ່າທີ່ສຸດໃນຈໍານວນເດັກນ້ອຍ ທີ່ດໍາລົງຊີວິດຢູ່ເຂດຊົນນະບົດທີ່ບໍ່ມີຖະໜົນເຂົ້າເຖິງ, ເດັກນ້ອຍທີ່ຢູ່ໃນຄອບຄົວທຸກຍາກທີ່ສຸດ ແລະ ເດັກນ້ອຍທີ່ແມ່ທີ່ບໍ່ໄດ້ຮັບການສຶກສາ. ພາກເໜືອມີອັດຕາລອດເຫຼືອສູງທີ່ສຸດ ແລະ ພາກໃຕ້ຕໍ່າທີ່ສຸດ. ກ່ຽວກັບຜົນຂອງການຮຽນ, ສໍາລັບວິຊາຄະນິດສາດນັກຮຽນ ປ໋5 ສ່ວນຫຼາຍ (73%) ຍັງບໍ່ມີຄວາມສາມາດ ເຖິງລະດັບຕໍ່າສຸດທີ່ຈະສາມາດ ນໍາໃຊ້ມັນໃຫ້ເປັນປະໂຫຍດໃນສັງຄົມລາວ, ໃນຂະນະທີ່ມີພຽງພາກສ່ວນໜ້ອຍເທົ່ານັ້ນທີ່ສາມາດໄປເຖິງລະດັບ ດັ່ງກ່າວສໍາລັບວິຊາພາສາລາວ ແລະ ວິຊາໂລກອ້ອມຕົວ.

ອີງໃສ່ຈໍາໂຮງຮຽນທີ່ມີໃນປະຈຸບັນ ແມ່ນມີຄວາມສາມາດ ທີ່ຈະຮອງຮັບ ນັກຮຽນທັງໝົດທີ່ຕ້ອງການເຂົ້າຮຽນ. ນີ້ແມ່ນຢັ້ງຢືນຈາກອັດຕາການເຂົ້າຮຽນລວມ, ມັນເພີ່ມຂຶ້ນຍ້ອນຕົວເລກນັກຮຽນຮຽນຊໍ້າຊັ້ນ. ການຄາດຄະເນປະຊາກອນໄດ້ຕີຄວາມໝາຍ ກ່ຽວກັບການເພີ່ມຂຶ້ນຂອງຕົວເລກດັ່ງກ່າວ ນີ້ແນວໃດຖ້າຫາກວ່າເດັກນ້ອຍ ທັງໝົດນີ້ຮຽນຈົບຊັ້ນປະຖົມ? ຕົວເລກທີ່ຄາດຄະເນໄວ້ສໍາລັບປະຊາກອນໃນເກນອາຍຸເຂົ້າຮຽນ ໂດຍອີງຕາມການຄາດຄະເນເປັນທາງການ ຈະບໍ່ມີການປ່ຽນແປງຫຼາຍໃນ 20 ປີຂ້າງໜ້າ (ເຫັນໄດ້ຈາກຕາຕະລາງລຸ່ມນີ້). ການຄາດຄະເນປານກາງສະແດງໃຫ້ເຫັນ ການຫຼຸດລົງຂອງຈໍານວນເດັກນ້ອຍລະຫວ່າງ ປີ 2010 ຫາ ປີ 2020 ແມ່ນ 9%, ແລະ ຫຼັງຈາກນັ້ນຈະເພີ່ມຂຶ້ນເປັນ 10% ໃນທົດສະວັດຕໍ່ໄປ. ໃນໄລຍະແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 (2016-2020), ການຄາດຄະເນປານກາງສະແດງໃຫ້ເຫັນວ່າຈໍານວນເດັກນ້ອຍ ອາຍຸ 5-14 ປີ ຈະຫຼຸດລົງ 3.7%.

**ຕົວເລກຄາດຄະເນ ສໍາລັບປະຊາກອນ ອາຍຸ 5-14 ປີ, ລະຫວ່າງ ປີ 2010 ຫາ ປີ 2030**

| ປີ | ການຄາດຄະເນ | | |
|---|---|---|---|
| | ສູງ('000) | ກາງ('000) | ຕໍ່າ('000) |
| 2010 | 1,645 | 1,645 | 1,645 |
| 2015 | 1,583 | 1,583 | 1,583 |
| 2020 | 1,504 | 1,499 | 1,490 |
| 2025 | 1,557 | 1,536 | 1,503 |
| 2030 | 1,698 | 1,656 | 1,592 |

ການຫຼຸດລົງ ຂອງພົນລະເມືອງໃນເກນອາຍຸເຂົ້າຮຽນເທື່ອລະໜ້ອຍ ຕາມທີ່ໄດ້ຄາດຄະເນໄວ້ນັ້ນເປັນການໃຫ້ຄຳແນະນຳວ່າ ແຜນພັດທະນາຄັ້ງທີ 8 ນີ້ ແມ່ນຊ່ວງເວລາສຳລັບ "ການພັກດັນອັນໃຫຍ່ຫຼວງ" ທາງດ້ານການສຶກສາ, ເພື່ອຮັບປະກັນການຮຽນຈົບຊັ້ນປະຖົມ, ພ້ອມດຽວກັນ ກໍເພີ່ມອັດຕາສ່ວນການເຂົ້າຮຽນຕໍ່ຊັ້ນມັດທະຍົມ. ດ້ວຍການຫຼຸດຜ່ອນອັດຕາຄ້າງຫ້ອງນັ້ນ, ມີຄວາມເປັນໄປໄດ້ທີ່ຈະກ້າວເຖິງການບັນລຸເປົ້າໝາຍການສຶກສາຂັ້ນປະຖົມເພື່ອທຸກຄົນ, ໂດຍບໍ່ຈຳເປັນຕ້ອງເພີ່ມຈຳນວນຫ້ອງຮຽນ ແລະ ຄູສອນ, ແຕ່ໃນຂະນະດຽວກັນແນ່ນອນວ່າການສ້າງ ໂຮງຮຽນຫຼັງໃໝ່ເພື່ອໃຫ້ມີການເຂົ້າເຖິງ ສຳລັບປະຊາກອນທີ່ຢູ່ເຂດຫ່າງໄກສອກຫຼີກ, ແລະ ການໃຫ້ການຝຶກອົບຮົມແກ່ຄູສອນເພື່ອ ຍົກລະດັບໃນການປັບປຸງຄຸນະພາບ ການສຶກສາໃຫ້ດີຂຶ້ນຍັງເປັນສິ່ງ ທີ່ ຈຳເປັນ.

ອັດຕາການເລື່ອນຊັ້ນ ຈາກປະຖົມຫາມັດທະຍົມກໍໄດ້ເພີ່ມຂຶ້ນຢ່າງເຫັນໄດ້ຊັດເຈນ ຈາກ 60% ໃນຊຸມປີ 1990 ຫາ 88% ໃນປີ 2012. ອັດຕາການເຂົ້າຮຽນສຸດທິ ໃນຊັ້ນມັດທະຍົມກໍເພີ່ມຂຶ້ນເຊັ່ນດຽວກັນຈາກ 20% ໃນຊຸມປີ 1990 ຫາ 40% ໃນປີ 2010. ປະມານ 20% ຂອງເດັກນ້ອຍໃນເກນອາຍຸເຂົ້າຮຽນມັດທະຍົມຍັງຮຽນຢູ່ຊັ້ນປະຖົມ ເນື່ອງຈາກເລີ່ມ ເຂົ້າໂຮງຮຽນຊ້າ, ນັ້ນໝາຍຄວາມວ່າຍັງມີປະມານ 30% ຂອງເດັກນ້ອຍໃນເກນອາຍຸເຂົ້າຮຽນມັດທະຍົມທີ່ບໍ່ໄດ້ເຂົ້າຮຽນ. ນະໂຍບາຍ "ການພັກດັນອັນໃຫຍ່ຫຼວງ" ທີ່ໄດ້ສະເໜີໄປນັ້ນຮຽກຮ້ອງໃຫ້ມີ ການເພີ່ມອັດຕາເຫຼົ່ານີ້ຢ່າງຕໍ່ເນື່ອງສະໝໍ່າສະເໝີ, ມັນບໍ່ພຽງແຕ່ເປັນການສ້າງກຳລັງແຮງງານ ທີ່ຕ້ອງການເທົ່ານັ້ນຖ້າວ່າ ສປປ ລາວ ຢາກຈະຍົກສູງຕ່ອງໂສ້ການເພີ່ມຄຸນຄ່າ, ແຕ່ມັນຍັງຕ້ອງເຮັດໃຫ້ເປັນປົກກະຕິ ເພື່ອຮັບປະກັນໃຫ້ໄດ້ລະດັບຕໍ່າສຸດຂອງການຮູ້ໜັງສື ແລະ ທັກສະຄະນິດສາດໃນກຸ່ມກຳລັງແຮງງານໜຸ່ມນ້ອຍ.

ຕົວເລກສະຖິຕິທີ່ໜ້າເປັນຫ່ວງ ທາງດ້ານການສຶກສາອີກອັນໜຶ່ງ ແມ່ນອັດຕາການຮູ້ໜັງສືໃນກຸ່ມຄົນໜຸ່ມ, ເຊິ່ງບໍ່ປະກົດວ່າມີການເພີ່ມຂຶ້ນເລີຍໃນຊ່ວງປີຜ່ານມາ (ບົດລາຍງານເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາ, ໜ້າ 63). ໃນບັນດາກຸ່ມໄວໜຸ່ມອາຍຸ 15-24 ປີ, ມີພຽງ 73% ເທົ່ານັ້ນ ທີ່ຮູ້ໜັງສື ໃນປີ 2011, ແລະ ຜູ້ທີ່ບໍ່ສາມາດນຳໃຊ້ການຮູ້ສືໜັງໄດ້ລວມມີ ຜູ້ທີ່ໄດ້ເຂົ້າໂຮງຮຽນປະຖົມ, ທີ່ຈິງແລ້ວລວມທັງບາງຄົນ ທີ່ໄດ້ຮຽນຈົບຈົບຊັ້ນປະຖົມ. ເຊິ່ງອັດຕານີ້ມີຄວາມແຕກຕ່າງກັນອີງຕາມຖາ ນະທາງດ້ານເສດຖະກິດ - ສັງຄົມ ແລະ ສະຖານທີ່ດຳລົງຊີວິດ - ຕົວເມືອງ, ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ. ຂໍ້ມູນອ້າງອີງເພີ່ມເຕີມ ແມ່ນມາຈາກບົດລາຍງານການປະເມີນການອ່ານຂອງນັກຮຽນຊັ້ນປະຖົມ ປີ 2012, ເຊິ່ງພົບວ່າໃນບັນດາໂຮງຮຽນທີ່ເປັນຕົວແທນຂອງການສຳຫຼວດ, ຫຼາຍກ່ວາ 40% ຂອງນັກຮຽນ ປ5 ບໍ່ທັນເຖິງລະດັບຂັ້ນພື້ນ

ຖານທີ່ເຮັດໃຫ້ເຂົາເຈົ້າສາມາດ ເຂົ້າໃຈສິ່ງທີ່ເຂົາເຈົ້າອ່ານ. ໃນການເລືອກໂຮງຮຽນຕົວແທນໃນການສຳຫຼວດຄັ້ງນີ້, ໂຮງຮຽນຂະໜາດໃຫຍ່ໄດ້ຖືກເລືອກເຂົ້າມາຫຼາຍ ແລະ ໂຮງຮຽນຊົນເຜົ່າສ່ວນນ້ອຍ ໄດ້ຖືກເລືອກເຂົ້າມາໜ້ອຍກວ່າ, ດັ່ງນັ້ນ "ຈຶ່ງມີຄວາມຮີບດ່ວນໃນການວາງມາດຕະການ ເພື່ອປັບປຸງການອ່ານສຳລັບຫ້ອງເລີ່ມຕົ້ນ ໃນປະເທດລາວ ເຊິ່ງເປັນ ບັນຫາໃຫຍ່ກວ່າທີ່ຕົວແທນດັ່ງກ່າວສະແດງໃຫ້ເຫັນ" (ບົດລາຍງານການປະເມີນການອ່ານນັກຮຽນຊັ້ນປະຖົມ, ໜ້າ 8).

ຂໍ້ມູນອ້າງອີງ ກ່ຽວກັບຄຸນະພາບຂອງການສຶກສາສະແດງໃຫ້ເຫັນ ເຖິງຄວາມໜ້າເປັນຫ່ວງ. ຜົນຂອງການຮຽນທີ່ບໍ່ໄດ້ຄຸນະພາບ ແລະ ຈຳກັດຕໍ່ກັບການຮູ້ໜັງສືຂອງຜູ້ໃຫຍ່ໄດ້ສ່ອງແສງໃຫ້ເຫັນຢ່າງຈະແຈ້ງ ໃນການປຽບທຽບການຮູ້ໜັງສືຂອງຜູ້ໃຫຍ່ ໃນລະດັບສາກົນ. "ທັກສະການຮູ້ໜັງສືຂອງ ສປປ ລາວ ແມ່ນຕ່ຳກວ່າຫຼາຍທຽບໃສ່ ປະເທດອື່ນໆ ເຊັ່ນ ຫວຽດນາມ, ບໍລິເວຍ, ສີລັງກາ ແລະ ແຂວງຢູນານ ຂອງປະເທດຈີນ.. ..ຜູ້ທີ່ຈົບຊັ້ນມັດທະຍົມໃນ ສປປ ລາວ ມີຄວາມສາມາດທຽບເທົ່າຜູ້ທີ່ຈົບຊັ້ນປະຖົມ ຢູ່ປະເທດຫວຽດນາມ" (ອີງການທະນາຄານໂລກ (World Bank), 2014:50).

ຖ້າ ສປປ ລາວ ຕ້ອງການຈະກ້າວໄປສູ່ປະເທດທີ່ມີເສດຖະກິດແບບຜົນຜະລິດທີ່ສູງ, ບັນດາອັດຕາການຮູ້ໜັງສື ສຳລັບເກືອບທຸກຄົນແມ່ນສິ່ງທີ່ຈຳເປັນຈະຕ້ອງເຮັດໃຫ້ໄດ້. ເຊິ່ງມັນຮຽກຮ້ອງໃຫ້ ເດັກນ້ອຍໝົດທຸກຄົນຕ້ອງຮຽນຈົບຊັ້ນປະຖົມ, ພ້ອມທັງປັບປຸງຄຸນະພາບຂອງການຮຽນການສອນ, ດ້ວຍວິທີນັ້ນຜູ້ທີ່ຮຽນຈົບຊັ້ນປະຖົມ ຈຶ່ງຈະສາມາດນຳໃຊ້ຄວາມຮູ້ດັ່ງກ່າວໃຫ້ເປັນປະໂຫຍດໄດ້. ອັດຕາສ່ວນຂອງເດັກນ້ອຍ ທີ່ກ້າວສູ່ຊັ້ນມັດທະຍົມທີ່ສູງຂຶ້ນ ຈະເປັນການຮັບປະກັນໃຫ້ລະດັບຄວາມຮູ້ສູງຂຶ້ນ, ແຕ່ຕາມບົດລາຍງານການປະເມີນການອ່ານນັກຮຽນຊັ້ນປະຖົມ ບອກວ່ານັກຮຽນຈຳນວນຫຼວງຫຼາຍ ທີ່ຜ່ານການສອບເສັງຊັ້ນປະຖົມ ອາດຈະຂາດຄວາມສາມາດທີ່ຈະຮັບມືກັບຫຼັກສູດ ທີ່ຍາກກວ່າຂອງຊັ້ນມັດທະຍົມ.

**ບັນຫາການແຕ່ງງານກ່ອນໄວອັນຄວນຈຳເປັນຕ້ອງໄດ້ຮັບແກ້ໄຂ. ສປປ ລາວ ເປັນປະເທດທີ່ມີຜູ້ແຕ່ງງານ ຕັ້ງແຕ່ອາຍຸຍັງນ້ອຍສູງທີ່ສຸດໃນອາຊຽນ.**

ໃນ ສປປ ລາວ ອາຍຸຕ່ຳສຸດທີ່ອານຸຍາດຢ່າງເປັນທາງການໃຫ້ມີການແຕ່ງງານໄດ້ ແມ່ນ 18 ປີ, ສຳລັບທັງຜູ້ຍິງ ແລະ ຜູ້ຊາຍ (ຕາມກົດໝາຍຄອບຄົວຂອງ ສປປ ລາວ ເລກທີ 05/ສພຊ ລົງວັນທີ 26 ກໍລະກົດ 2008, ພາກທີ 2, ມາດຕາ 9). ເຖິງຢ່າງໃດກໍຕາມ, ການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2011-12 ພົບວ່າ ໃນຈຳນວນແມ່ຍິງ ອາຍຸ 25-49 ປີ, ມີ 30% ໄດ້ແຕ່ງງານເມື່ອອາຍຸໄດ້ 18 ປີ, ແລະ 11% ໄດ້ແຕ່ງງານເມື່ອອາຍຸໄດ້ 15 ປີ.

ຕົວເລກດັ່ງກ່າວ ບໍ່ມີການປ່ຽນແປງພໍເທົ່າໃດ ຕະຫຼອດໄລຍະເວລາຜ່ານມາ; ຈຳນວນແມ່ຍິງ ອາຍຸ 20-24 ປີ, ມີ 35% ໄດ້ແຕ່ງງານເມື່ອອາຍຸໄດ້ 18 ປີ, ແລະ 9% ໄດ້ແຕ່ງງານເມື່ອອາຍຸ ໄດ້ 15 ປີ. ຮອດປະຈຸບັນຕົວເລກດັ່ງກ່າວ ແມ່ນສູງທີ່ສຸດໃນບັນດາປະເທດອາຊຽນ, ແຕ່ຕໍ່າກ່ວາລະດັບທີ່ສໍາຫຼວດໃນປະເທດບັງກຣາເທດ.

ດັ່ງນັ້ນ ອາຍຸແຕ່ງງານຕໍ່າສຸດໃນກົດໝາຍ ໃນ ສປປ ລາວ ຈຶ່ງເຫັນໄດ້ຈະແຈ້ງວ່າມີຜົນກະທົບພຽງເລັກນ້ອຍ ຕໍ່ກັບອາຍຸແຕ່ງງານໃນຕົວຈິງ.

ການທີ່ແມ່ຍິງແຕ່ງງານກ່ອນໄວອັນຄວນ ສ່ວນຫຼາຍແລ້ວ ແມ່ນແຕ່ງງານກັບຜູ້ຊາຍທີ່ມີອາຍຸຫຼາຍກວ່າຕົນເອງ: ໃນປີ 2011-12, ໃນຈຳນວນແມ່ຍິງ ອາຍຸ 15-24 ປີ ທີ່ແຕ່ງງານແລ້ວ, ປະມານໜຶ່ງໃນສີ່ ຂອງແມ່ຍິງແຕ່ງງານກັບຜູ້ຊາຍທີ່ມີອາຍຸແກ່ກວ່າຕົນເອງ 5 ຫາ 9 ປີ, ໜຶ່ງໃນສິບ ແຕ່ງງານກັບຜູ້ຊາຍທີ່ມີອາຍຸແກ່ກວ່າຕົນເອງ 10 ປີ ຫຼື ຫຼາຍກ່ວາ. ຄວາມແຕກຕ່າງດ້ານອາຍຸທີ່ສູງກ່ວາໝູ່ ແມ່ນມີຢູ່ໃນເຂດຕົວເມືອງ. ຂໍ້ມູນດັ່ງກ່າວເປັນການສ່ອງແສງໃຫ້ເຫັນສ່ວນໜຶ່ງ ວ່າທ່າອ່ຽງທີ່ຜູ້ຊາຍຢູ່ເຂດຊົນນະບົດ ຈະແຕ່ງງານຕັ້ງແຕ່ອາຍຸຍັງນ້ອຍແມ່ນຍັງຫຼາຍ. ໃນປະເທດລາວທັງໝົດ, 15% ຂອງຜູ້ຊາຍອາຍຸ 20-49 ປີ ແຕ່ງງານກ່ອນຈະຮອດ 18 ປີ, ແຕ່ຕົວເລກດັ່ງກ່າວໃນເຂດຊົນນະບົດແມ່ນ 18% (24% ໃນ ຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ), ທຽບໃສ່ເຂດຕົວເມືອງແມ່ນ 7%.

ໃນຄວາມເປັນຈິງແລ້ວ ບໍ່ແມ່ນແຕ່ຢູ່ປະເທດລາວເທົ່ານັ້ນ ທີ່ບັນຫາການແຕ່ງງານຕັ້ງແຕ່ອາຍຸຍັງນ້ອຍຖືກເມີນເສີຍ. ຍັງພົບໃນປະເທດບັງກຣາເທດ, ອິນເດຍ ແລະ ອິນໂດເນເຊຍເຊັ່ນກັນ. ນີ້ຊີ້ໃຫ້ເຫັນວ່າການບັງຄັບໃຊ້ກົດໝາຍ ວ່າດ້ວຍອາຍຸຕໍ່າສຸດສໍາລັບການແຕ່ງງານແມ່ນປະຕິບັດໄດ້ຍາກຫຼາຍ, ເຖິງແມ່ນວ່າຈະມີຄວາມພະຍາຍາມ ໃນການບັງຄັບໃຊ້ກໍຕາມ, ສະນັ້ນຈະຕ້ອງໄດ້ມີການຄົ້ນຫາເຄື່ອງມືອັນອື່ນອີກ ເພື່ອຫຼຸດຜ່ອນພຶດຕິກຳການແຕ່ງງານໃນໄວເດັກ.

ບັນຫາໃຫຍ່ທີ່ສໍາຄັນ ທີ່ເຮັດໃຫ້ມີການແຕ່ງກ່ອນໄວອັນຄວນ ແມ່ນຍ້ອນວັດທະນະທຳ, ສັງຄົມ ແລະ ສິ່ງຈູງໃຈທາງເສດຖະກິດ. ການແຕ່ງງານກ່ອນໄວອັນຄວນ ສ່ວນຫຼາຍແມ່ນເກີດຂຶ້ນຢູ່ເຂດຊົນນະບົດ, ໃນບັນດາແຂວງພາກເໜືອ, ໃນກຸ່ມທີ່ໃຊ້ພາສາມົ້ງ-ມຽນ ແລະ ມອນ-ຂະແມ, ເຊິ່ງກຸ່ມຄົນເຫຼົ່ານັ້ນ ບໍ່ໄດ້ເຂົ້າໂຮງຮຽນ ຫຼື ໄດ້ເຂົ້າຮຽນຊັ້ນປະຖົມເທົ່ານັ້ນ, ແລະ ໃນກຸ່ມທີ່ທຸກຍາກທີ່ສຸດ (ການສໍາຫຼວດດັດຊະນີໝາຍສັງຄົມລາວ, ຕາຕະລາງ MS.4.1). ການພັດທະນາທາງດ້ານເສດຖະກິດ (ລວມທັງການຢຸດການຖາງປ່າເຮັດໄຮ່ມາເຮັດອາຊີບທີ່ໝັ້ນຄົງກ່ວາ ເຊິ່ງການນໍາໃຊ້ແຮງງານເດັກໜ້ອຍລົງ), ການຂະຫຍາຍການສຶກສາ, ການຫັນເປັນຕົວເມືອງ ແລະ ການເພີ່ມຂຶ້ນຂອງລາຍໄດ້ ທີ່ຄາດວ່າຈະເຮັດໃຫ້

ສັດສ່ວນ ການແຕ່ງງານກ່ອນໄວອັນຄວນຫຼຸດລົງ. ເຖິງຢ່າງໃດກໍຕາມຈະຕ້ອງໄດ້ມີມາດຕະການສະເພາະ ແທນທີ່ຈະມີແຕ່ລໍຖ້າໃຫ້ອັດຕາການແຕ່ງງານກ່ອນໄວອັນຄວນ ຫຼຸດລົງຊ້າໆຍ້ອນປັດໄຈທີ່ກ່າວມາຂ້າງເທິງນັ້ນ.

ຍ້ອນຫຍັງ? ຍ້ອນວ່າຜົນເສຍຂອງການແຕ່ງງານໃນໄວເດັກມີມູນຄ່າສູງຫຼາຍ, ກະທົບໃຫ້ແກ່ທັງຕົນເອງ ແລະ ສັງຄົມ. "ການແຕ່ງງານໃນໄວເດັກ ມີຜົນກະທົບຕໍ່ເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາເກືອບທຸກໆເປົ້າໝາຍ. ມັນເປັນອຸປະສັກຕໍ່ການຫຼຸດຜ່ອນຄວາມທຸກຍາກ, ການບັນລຸເປົ້າໝາຍການສຶກສາຂັ້ນປະຖົມຢ່າງທົ່ວເຖິງ, ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ປັບປຸງສຸຂະພາບແມ່ແລະເດັກ, ແລະ ຫຼຸດຜ່ອນໂລກເອດສ HIV/AIDS. ການແຕ່ງການໃນໄວເດັກຍັງເປັນການລະເມີດສິດທິຂອງແມ່ຍິງ ແລະເດັກນ້ອຍ ໂດຍກີດຂວາງບໍ່ໃຫ້ເຂົາເຈົ້າໄດ້ເຂົ້າເຖິງການສຶກສາ, ສຸຂະພາບທີ່ດີ ແລະຂາດອິດສະລະພາບ." (ເຮີວີສ ແລະ ຟີວແມນ-ແຈກຄອບສ, 2011: 2)

**ອັດຕາການຕາຍຂອງແມ່ ແລະ ເດັກ**

ໂດຍລວມແລ້ວ ອັດຕາການຕາຍຂອງເດັກອ່ອນຢູ່ ສປປ ລາວ ແມ່ນໄດ້ຮັບການປັບປຸງໃຫ້ດີຂື້ນຢ່າງຊັດເຈນ, ໃນປີ 2011 ຕົວເລກດັ່ງກ່າວຫລຸດລົງເຖິງ 68 ຄົນຕໍ່ ເດັກເກີດມີຊີວິດ 1,000 ຄົນ. ເຖິງແນວນັ້ນກໍຕາມມັນຍັງບໍ່ແນ່ນອນວ່າ ເປົ້າໝາຍທີ່ຕັ້ງໄວ້ ໃນປີ 2015 ຢູ່ທີ່ 45 ຄົນຕໍ່ເດັກເກີດມີຊີວິດ 1,000 ຄົນ ຈະສາມາດບັນລຸໄດ້ບໍ. ເຊັ່ນດຽວກັນກັບອັດຕາການຕາຍຂອງເດັກຕໍ່າກ່ວາ 5 ປີ, ເຫັນວ່າໃກ້ຄຽງກັບເປົ້າໝາຍທີ່ຕັ້ງໄວ້, ໂດຍຫຼຸດລົງປະມານປີລະ 4% (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ, ໜ້າ 86). ການເພີ່ມການເອົາໃຈໃສ່ ການຕາຍຂອງເດັກນ້ອຍຕໍ່າກ່ວາ 5 ປີ ແມ່ນເຫັນໄດ້ຊັດເຈນຕາມຮູບແບບທົ່ວໄປ ໃນຊ່ວງປະເທດພັດທະນາ. ເພື່ອບັນລຸເປົ້າໝາຍ ບັນຫາການຕາຍຂອງເດັກອ່ອນ ແລະ ເດັກນ້ອຍຮຽກຮ້ອງໃຫ້ບັນລຸການເຂົ້າເຖິງ ກຸ່ມຄົນທຸກຍາກ ທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ, ເພາະວ່າຄວາມແຕກຕ່າງໃນອັດຕາການຕາຍຂອງອ່ອນ ຍັງສູງຫຼາຍ, ແລະ ເບິ່ງຄືວ່າຜົນທີໄດ້ຮັບຈາກການ ພັດທະນາເສດຖະກິດ-ສັງຄົມຈົນເຖິງປະຈຸບັນ ແລະການຫຼຸດຜ່ອນການຕາຍ ແມ່ນເກີດຢູ່ໃນກຸ່ມຄົນທີ່ບໍ່ທຸກຍາກ, ມີການສຶກສາດີກ່ວາ ແລະສາມາດຮັບເອົາ ການພັດທະນາໄດ້ດີກວ່າ (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ, ໜ້າ 86).

ການສິ້ນສຸດຂອງການຂ້າມຜ່ານທາງດ້ານປະຊາກອນ - ການກ້າວເຖິງທັງການຕາຍ ແລະການຈະເລີນພັນທີ່ຕໍ່າ - ສ່ວນໃຫຍ່ມາຈາກຜົນສຳເລັດໃນການຫລຸດຜ່ອນການຕາຍຂອງເດັກອ່ອນ ແລະ ເດັກນ້ອຍ. ອັດຕາການຕາຍແມ່ນຂ້ອນຂ້າງຈະແຈ້ງ ຍ້ອນວ່າອັດຕາສ່ວນການຕາຍຂອງເດັກນ້ອຍ ຕໍ່ກັບການຕາຍທັງໝົດແມ່ນສູງ. ດ້ານການຈະເລີນພັນຢູ່ຄວາມ

ໝັ້ນໃຈວ່າເດັກອ່ອນ ຈະຕ້ອງບໍ່ຕາຍແມ່ນເປັນສິ່ງສໍາຄັນ ທີ່ຈະເຮັດໃຫ້ບັນລຸລະດັບການຈະເລີນພັນໃນລະດັບທົດແທນ.

ອັດຕາການຕາຍຂອງແມ່ແມ່ນ ໄດ້ຫຼຸດລົງຈາກ 796 ຕໍ່ເດັກເກີດມີຊີວິດ 100,000 ຄົນໃນປີ 1995 ຫາ 530 ໃນປີ 2000 ແລະ ຫຼຸດລົງຕື່ມອີກ ເຖິງ 357 ໃນປີ 2009. ເຫັນວ່າ ຍັງມີຄວາມຄາດເຄື່ອນຫຼາຍສົມຄວນ ໃນການຄາດຄະເນດັ່ງກ່າວ. ເຖິງຢ່າງໃດກໍຕາມຈະຕ້ອງໄດ້ເຮັດໃຫ້ຫຼຸດລົງຕື່ມອີກ ເພື່ອບັນລຸເປົ້າໝາຍສະຫັດສະຫວັດ ຄື 260 ໃນປີ 2015.

ການສະໜັບສະໜູນຢ່າງຈິງຈັງ ແມ່ນມີຄວາມຈໍາເປັນທີ່ສຸດ ເພື່ອຈະສາມາດຫຼຸດຜ່ອນອັດຕາການຕາຍຂອງເດັກ ແລະ ອັດຕາການຕາຍຂອງແມ່. ການຫຼຸດຜ່ອນທັງສອງຕົວເລກແມ່ນມີຄວາມຫຍຸ້ງຍາກຫຼາຍ ໃນ ສປປ ລາວ, ເນື່ອງຈາກຫຼາຍໆບັນຫາທີ່ກ່ຽວພັນກັນ. ອັນທີໜຶ່ງແມ່ນ ຍ້ອນມີຄວາມແຕກໂຕນຫຼາຍລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກຍາກ, ເຊິ່ງ ມີທ່າອ່ຽງທີ່ຈະກວ້າງອອກຕື່ມອີກ (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ, ໜ້າ 86). ບັນຫາອື່ນອີກແມ່ນ ຊຸມຊົນທີ່ທຸກຍາກສ່ວນໃຫຍ່ ແມ່ນຢູ່ເຂດທີ່ຫ່າງໄກສອກຫຼີກ, ລວມທັງບັນດາບ້ານທີ່ບໍ່ມີເສັ້ນທາງເຂົ້າເຖິງ. ນີ້ໝາຍຄວາມວ່າພວກເຂົາເຈົ້າຍັງບໍ່ສາມາດເຂົ້າເຖິງ ການບໍລິການສາທາລະນະສຸກທີ່ເປັນເງື່ອນໄຂ ໃນການຫຼຸດອັດຕາການຕາຍຂອງແມ່ ແລະ ເດັກ. ເຖິງຢ່າງໃດກໍຕາມຜົນສໍາເລັດຜ່ານມາ ແມ່ນເປັນທີ່ໜ້າພໍໃຈ ຫຼາຍ, ສິ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ເພີ່ມ ແມ່ນການຫຼຸດອັດຕາການຕາຍ ຂອງເດັກເກີດໃໝ່ທີ່ເປັນປັດໃຈຫຼັກ ຕໍ່ອັດຕາການຕາຍຂອງເດັກນ້ອຍຕໍ່າກວ່າ 5ປີ.

ສາຍເຫດການຕາຍຂອງແມ່ ແລະ ເດັກແມ່ນສະລັບຊັບຊ້ອນ. ໂຄງສ້າງ, ບັນຫາພື້ນຖານ ແລະ ການກະຕວງ ແມ່ນສາມາດສາມາດອ້າງອີງໄດ້ທັງໝົດ. ໃນກໍລະນີການຕາຍຂອງແມ່, ການເກີດລູກທີ່ປອດໄພ ແມ່ນມີຄວາມແຕກຕ່າງກັນຫຼາຍ ລະຫວ່າງແຕ່ລະກຸ່ມຄົນທີ່ແຕກຕ່າງກັນທາງດ້ານເສດຖະກິດ-ສັງຄົມ. ໂດຍທົ່ວໄປ, ອັດຕາການເກີດລູກທີ່ມີສິ່ງເອື້ອອໍານວຍແມ່ນຍັງຕໍ່າ (38%) ເຖິງແມ່ນຈະມີຄວາມຄືບໜ້າດີແຕ່ຄຸນນະພາບການ ບໍລິການດ້ານສຸຂະພາບຍັງຕໍ່າ ນັ້ນໝາຍຄວາມວ່າການເກີດລູກທີ່ມີສິ່ງເອື້ອອໍານວຍນັ້ນ ບໍ່ສາມາດຫຼຸດຜ່ອນຄວາມສ່ຽງການຕາຍ ຂອງແມ່ໄດ້ຕາມທີ່ຄວນ. ການບໍລິການສຸຂະພາບກ່ອນ ແລະ ຫຼັງເກີດກໍໄດ້ມີການປັບປຸງດີຂຶ້ນຫຼາຍໃນໄລຍະຜ່ານມາ, ຈໍານວນແມ່ຍິງທີ່ບໍ່ຕ້ອງການມີລູກແຕ່ບໍ່ໄດ້ຄຸມກໍາເນີດ ກໍໄດ້ຫຼຸດລົງ. ເຖິງຢ່າງໃດກໍຕາມ, ການປັບປຸງບັນດາຕົວຊີ້ວັດເຫຼົ່ານີ້ໃຫ້ດີຂຶ້ນຕື່ມ ແມ່ນຍັງຕ້ອງການສືບຕໍ່. ການເກີດລູກຂອງແມ່ທີ່ອາຍຸຍັງນ້ອຍກໍເປັນປັດໃຈກະທົບຕໍ່ອັດຕາການຕາຍຂອງ ແມ່ ແລະ ກ່ຽວພັນກັບການແຕ່ງງານກ່ອນໄວອັນຄວນຂອງແມ່ຍິງຈໍານວນຫຼາຍ.

ການສະໜອງວິທີການຄຸມກໍາເນີດ ໃຫ້ກັບແມ່ຍິງທີ່ຍັງບໍ່ຕ້ອງການຖືພາ ແຕ່ບໍ່ສາມາດເຂົ້າເຖິງການຄຸມກໍາເນີດ ຄວນເປັນຈຸດປະສົງຫຼັກຂອງນະໂຍບາຍຂອງລັດຖະບານ ໃນຂະແໜງການສາທາລະນະສຸກ. ການມີລູກທີ່ບໍ່ຕັ້ງໃຈເປັນອັນຕະລາຍຕໍ່ສຸຂະພາບຂອງທັງແມ່ ແລະ ລູກ. ມັນເປັນສາເຫດໃຫ້ ອັດຕາການຕາຍຂອງແມ່ ແລະ ເດັກເກີດໃໝ່ສູງຂຶ້ນ, ເພາະວ່າຈາກການສຶກສາຂອງສາກົນ ໄດ້ສະແດງໃຫ້ເຫັນວ່າ ຄວາມສ່ຽງຕໍ່ສຸຂະພາບຂອງທັງແມ່ ແລະ ເດັກແມ່ນສູງຂຶ້ນໃນກໍລະນີການເກີດລູກທີ່ບໍ່ຕັ້ງໃຈ. ຄວາມຈິງແລ້ວ, "ການວາງແຜນຄອບຄົວຢ່າງດຽວ ກໍຍັງສາມາດຕັດຈໍານວນການຕາຍຂອງແມ່ ໄດ້ເຖິງເກືອບໜຶ່ງສ່ວນສາມ, ສະນັ້ນມັນເປັນວິທີການທີ່ມີປະສິດທິພາບສູງສຸດ ໃນການຊ່ວຍຫຼຸດອັດຕາການຕາຍຂອງແມ່ລົງ." (ບົດລາຍງານເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ,ໜ້າ 98).

## ປະຊາກອນ ແລະ ຄວາມທຸກຍາກ

ໃນຂະນະທີ່ ສປປ ລາວ ມີຄວາມຄືບໜ້າດີໃນການຫຼຸດຜ່ອນຄວາມທຸກຍາກ ເຊິ່ງຫຼຸດລົງໄດ້ 40% ໃນໄລຍະ 15 ປີ ຈາກ ສົກປີ 1992/93 ຫາ 2005/08, ໃນເວລານັ້ນເກືອບ 28% ຂອງປະຊາກອນແມ່ນທຸກຍາກ, ແລະ ຫຼາຍກວ່າໜຶ່ງສ່ວນສາມ - 37% - ຖ້ານໍາໃຊ້ຫຼັກການ $1 ຕໍ່ຄົນ ຕໍ່ມື້ ໃນການກໍານົດຈໍານວນຜູ້ທຸກຍາກ. ຄວາມທຸກຍາກສ່ວນໃຫຍ່ແມ່ນຢູ່ເຂດຊົນນະບົດ, ໂດຍສະເພາະແມ່ນເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ. ອັດຕາຄວາມທຸກຍາກໃນສົກປີ 2007/08 ມີດັ່ງລຸ່ມນີ້:

| | | |
|---|---|---|
| ເຂດຕົວເມືອງ | - | 17.4% |
| ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ | – | 29.9% |
| ເຂດຊົນນະບົດທີ່ມີທາງເຂົ້າເຖິງຍາກ | – | 42.6% |

ລາຍລະອຽດແມ່ນມີຢູ່ໃນ ບົດລາຍງານຄວາມຄືບໜ້າ ໃນການປະຕິບັດເປົ້າໝາຍສະຫັດສະຫວັດເພື່ອການພັດທະນາຂອງ ສປປ ລາວ ປີ 2013. ໃນບົດລາຍງານໄດ້ເວົ້າແຈ້ງວ່າກຸ່ມຄົນທີ່ທຸກຍາກທີ່ສຸດ ສ່ວນໃຫຍ່ແມ່ນຜູ້ທີ່ດໍາລົງຊີວິດຢູ່ເຂດ ຊົນນະບົດຫ່າງໄກສອກຫຼີກ, ເປັນຊົນເຜົ່າສ່ວນນ້ອຍ, ມີການສຶກສາຕໍ່າ, ມີຊັບສິນໜ້ອຍ ແລະ ມີຂໍ້ຈໍາກັດໃນການເຂົ້າເຖິງຕະຫຼາດ. ດັ່ງທີ່ບົດລາຍງານເປົ້າໝາຍສະຫັດສະຫວັດໄດ້ເວົ້າວ່າ "ການຂາດການສຶກສາ ແມ່ນເປັນສາເຫດຂອງຄວາມທຸກຍາກ ເນື່ອງຈາກວ່າການສຶກສາມີຜົນກະທົບ ທາງບວກຕໍ່ຜະລິດຕະພັນກະສິກໍາ, ການຫາວຽກເຮັດງານທໍາ, ການເຂົ້າເຖິງສິນເຊື່ອ, ການນໍາໃຊ້ບໍລິການຂອງລັດຖະບານ, ການມີສຸຂະພາບທີ່ດີ ແລະ ເປັນເຄື່ອງມືເພື່ອຊ່ວຍຜູ້ທຸກຍາກ ໃຫ້ພົ້ນຈາກຄວາມທຸກຍາກ." ໃນບົດລາຍງານຍັງຊີ້ໃຫ້ເຫັນວ່າບໍ່ພຽງແຕ່ ອັດຕາຄວາມທຸກຍາກຕໍ່ຫົວຄົນເທົ່ານັ້ນທີ່ຫຼຸດລົງ ແຕ່ຊ່ອງຫວ່າງຂອງຄວາມທຸກຍາກ ແລະ ຄວາມໜັກໜ່ວງຂອງຄວາມທຸກຍາກ ໃນລະດັບລວມຂອງປະເທດກໍແມ່ນຫຼຸດລົງ, ແຕ່ຄວາມໜັກໜ່ວງຂອງຄວາມທຸກຍາກ ໃນເຂດທີ່ມີ

ຄວາມຫຍຸ້ງຍາກທາງດ້ານພູມີສາດ ແມ່ນເພີ່ມຂຶ້ນ.

ໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 7 (ໜ້າ 49) ໄດ້ເວົ້າວ່າຄອບຄົວທີ່ທຸກຍາກສ່ວນຫຼາຍແມ່ນຄອບຄົວໃຫຍ່ ແລະ ການທີ່ຈະເຮັດໃຫ້ມີຂະໜາດຄອບຄົວນ້ອຍລົງ ນັ້ນແມ່ນເປັນຈຸດສຳຄັນ ຕໍ່ການຫລຸດຜ່ອນຄວາມທຸກຍາກ. ໃນແຜນດັ່ງກ່າວຍັງໄດ້ເວົ້າວ່າຈາກການການສຶກສາ ໄດ້ສະແດງໃຫ້ເຫັນວ່າໃນ 47 ຕົວເມືອງ ລະຫວ່າງສົກປີ 1992-93 ຫາ 1997-98, ອັດຕາຄວາມທຸກຍາກ ໄດ້ເພີ່ມຂຶ້ນ ພ້ອມໆກັບການເພີ່ມຂຶ້ນຂອງຂະໜາດຄອບຄົວ, ແຕ່ໃນຊ່ວງລະຫວ່າງຫຼັງຈາກນັ້ນຫາ ສົກປີ 2002-03, ອັດຕາຄວາມທຸກຍາກໄດ້ຫຼຸດລົງ ແລະ ຈຳນວນຄອບຄົວຂະໜາດໃຫຍ່ກໍຫຼຸດລົງເຊັ່ນດຽວກັນ.

ໃນດ້ານຍຸດທະສາດ, ໄດ້ມີການອຳນວຍຄວາມສະດວກໃຫ້ແກ່ສະມາຊິກຄອບຄົວທີ່ຢູ່ເຂດຫ່າງໄກສອກຫຼີກ ຜູ້ທີ່ຕ້ອງການຍົກຍ້າຍມາຢູ່ເຂດທີ່ສາມາດເຂົ້າເຖິງໄດ້ງ່າຍຂຶ້ນ ສາມາດຍົກຍ້າຍໄດ້. ນີ້ແມ່ນຈຸດປະສົງຫຼັກ ຂອງນະໂຍບາຍຂອງລັດຖະບານລາວ, ເຊິ່ງໄດ້ເຫັນວ່າມີເກືອບ 900 ບ້ານໄດ້ມີການຍົກຍ້າຍແລ້ວ ໃນສິບປີຜ່ານມາ ລວມທັງ ໜຶ່ງໃນຫ້າ ຂອງຄອບຄົວທີ່ຢູ່ເຂດພູສູງ (ບົດລາຍງານການພັດທະນາສະຫັດສະຫວັດ, ໜ້າ 31). ມັນມີຕົ້ນທຶນສູງຫຼາຍສຳລັບລັດຖະບານ ທີ່ຈະສ້າງຫົນທາງ, ຕາໜ່າງໄຟຟ້າ, ໂຮງຮຽນ ແລະການບໍລິການສາທາລະນະສຸກ ໃຫ້ບັນດາບ້ານຫ່າງໄກສອກຫຼີກ. ເຊິ່ງມີຄວາມເປັນໄປໄດ້ທີ່ຈະທຳການຍົກຍ້າຍປະຊາຊົນ ໄປຫາບ່ອນ ທີ່ມີສິ່ງອຳນວຍຄວາມສະດວກໄວ້ແລ້ວ ແລະ ມີເຫດຜົນພຽງພໍກວ່າທີ່ຈະສ້າງໃຫ້ໃໝ່. ເຖິງຢ່າງໃດກໍຕາມ, ມັນກໍຍັງມີບັນຄວາມຫຍຸ້ງຍາກຫຼາຍຢ່າງ. ນະໂຍບາຍດັ່ງກ່າວຈະຕ້ອງໄດ້ເຄົາລົບຄວາມມຸ່ງຫວັງ ຂອງປະຊາຊົນທີ່ຢູ່ຫ່າງໄກສອກຫຼີກນັ້ນ, ຄວາມຕ້ອງການຂອງເຂົາເຈົ້າອາດຈະບໍ່ສອດຄ່ອງ ກັບບັນດານັກວາງແຜນການພັດທະນາ. ແທ້ຈິງແລ້ວ, ຖ້າຈະໃຫ້ເລືອກຢ່າງຂາດຕົວລະຫວ່າງ ຍົກຍ້າຍມາຢູ່ບ່ອນໃໝ່ ທີ່ມີສິ່ງອຳນວຍດ້ານການສຶກສາ, ສາທາລະນະສຸກທີ່ດີກວ່າ, ແລະ ລາຍໄດ້ສູງກວ່າກັບການທີ່ຈະຢູບ່ອນເດີມ, ມີອັນໃດຢັ້ງຢືນວ່າປະຊາຊົນ ທີ່ຢູ່ເຂດຫ່າງໄກສອກຫຼີກມາແຕ່ດັ້ງເດີມນັ້ນ ຕ້ອງການທີ່ຈະຍ້າຍຫຼືບໍ່?

**ການເຄື່ອນຍ້າຍສາກົນ ອາດມີບົດບາດສຳຄັນສຳລັບອານາຄົດຂອງ ສປປ ລາວ.**

ໃນການຄາດຄະເນປະຊາກອນ, ໄດ້ຕັ້ງສົມມຸດຕິຖານວ່າການເຄື່ອນຍ້າຍ ປະຊາກອນສາກົນແມ່ນເທົ່າສູນ - ບໍ່ແມ່ນຍ້ອນມັນມີທ່າອ່ຽງແນວນັ້ນ, ແຕ່ຍ້ອນຂໍ້ມູນກ່ຽວກັບການເຄື່ອນຍ້າຍ ມີຈຳກັດ. ເນື່ອງຈາກ ສປປ ລາວ ມີຊາຍແດນຍາວຕິດກັບຫ້າປະເທດເພື່ອນ ບ້ານ, ແລະ ມີລະດັບການພັດທະນາທີ່ແຕກຕ່າງກັນຫຼາຍ, ການເຄື່ອນຍ້າຍຂອງປະຊາກອນລະຫວ່າງ ສປປ ລາວ ແລະ ປະເທດເພື່ອນ

ບ້ານເຫຼົ່ານີ້ຕ້ອງມີແນ່ນອນ, ແລະ ໃນອີກລະດັບໜຶ່ງ, ໂດຍຜ່ານບັນດາປະເທດເຫຼົ່ານີ້ໄປຫາປະເທດອື່ນໆໃນໂລກ. ອີງຕາມການຄາດຄະເນແບບພື້ນຖານຄົນລາວ ທີ່ອາໄສຢູ່ປະເທດໄທໃນປີ 2004 ແມ່ນ 180,000 ຄົນ, ແລະ ການຄາດຄະເນອື່ນໆ ແມ່ນຢູ່ລະຫວ່າງ 200,000 – 300,000 ຄົນ (ພູໄຊ, 2010: 32, 94). ປະເທດໄທຍັງເປັນປະເທດທີ່ຄົນລາວຈະຍ້າຍໄປຫຼາຍກ່ວາປະເທດອື່ນໆ ເນື່ອງຈາກລະດັບ ການພັດທະນາເສດຖະກິດສູງ ແລະ ຄ່າຈ້າງທີ່ສູງກວ່າ, ມີພາສາທີ່ຄ້າຍຄືກັນ ແລະ ພູມມີສາດຊາຍແດນທີ່ສະດວກໃນການເດີນທາງ.

ຕາມປົກກະຕິແລ້ວການເຄື່ອນຍ້າຍແມ່ນ ຕ້ອງມີການບັນທຶກ, ກະແສເຄື່ອນຍ້າຍຄວນໄດ້ມີການຕິດຕາມ, ແຕ່ກະແສເຄື່ອນຍ້າຍສ່ວນຫຼາຍມັກຈະບໍ່ໄດ້ມີການບັນທຶກ. ການເພີ່ມລະບຽບໃຫ້ເຄັ່ງຄັດ ຍິ່ງຈະເຮັດໃຫ້ການເຄື່ອນຍ້າຍບໍ່ເປັນທາງການຫຼາຍຂຶ້ນ ແລະ ບໍ່ສາມາດຢຸດກະແສໄດ້. ນະໂຍບາຍຄວນຈະສຸມໃສ່ການແກ້ບັນຫາ ການເຄື່ອນຍ້າຍບໍ່ເປັນທາງການໂດຍກົງ, ໂດຍສະເພາະແມ່ນການຄ້າມະນຸດ. ນະໂຍບາຍການພັດທະນາຂອງ ສປປ ລາວ ໄດ້ເນັ້ນໃສ່ການປ່ຽນປະເທດຈາກ "ປະເທດບໍ່ມີທາງອອກສູ່ທະເລ" ມາເປັນ "ປະເທດເຊື່ອມຕໍ່" ໂດຍເນັ້ນໃສ່ຜົນປະໂຫຍດຈາກການເປີດ ເສັ້ນທາງເຊື່ອມຕໍ່ກັບບັນດາປະເທດອື່ນໆ ເຊັ່ນ ຖະໜົນຫຼວງຕໍ່ໃສ່ປະເທດຫວຽດນາມ, ທາງລົດໄຟຕໍ່ກັບປະເທດຈີນ, ສ້າງຂົວຂ້າມນໍ້າຂອງເພີ່ມຈາກ 4 ແຫ່ງທີ່ມີຢູ່ແລ້ວຕໍ່ໃສ່ປະເທດໄທ, ການພັດທະນາດັ່ງກ່າວນັ້ນ ກ່ຽວພັນກັບການສ້າງຄວາມສະດວກງ່າຍດາຍໃນການຂ້າມຊາຍແດນ. ສະນັ້ນ ການເພີ່ມຂຶ້ນຂອງການເຄື່ອນຍ້າຍຂ້າມຊາຍແດນ ສາມາດສິ່ງຜົນປະໂຫຍດຕໍ່ການພັດທະນາ. ໃນເວລາດຽວກັນ,ສິ່ງທີ່ຫຼີກລ້ຽງບໍ່ໄດ້ແມ່ນ ການເພີ່ມຂຶ້ນຂອງກະແສການເຄື່ອນຍ້າຍທັງເຂົ້າ ແລະ ອອກປະເທດຢ່າງແນ່ນອນ.

**ການເຄື່ອນຍ້າຍພາຍໃນ ແລະ ຫັນເປັນຕົວເມືອງ**

ການເຄື່ອນຍ້າຍຂອງປະຊາກອນພາຍໃນປະເທດແມ່ນມີການສຶກສາໜ້ອຍທີ່ສຸດ, ເຖິງແມ່ນວ່າມັນມີບົດບາດສຳຄັນຫຼາຍ ໃນການປ່ຽນແປງຮູບແບບການກະຈາຍພົນລະເມືອງ. ໃນຊ່ວງໄລຍະ 20 ປີ ຜ່ານມາຮອດ 2005, ນະຄອນຫຼວງວຽງຈັນແມ່ນໄດ້ຮອງຮັບ ປະຊາກອນເຄື່ອນຍ້າຍເປັນຈຳນວນຫຼາຍທີ່ສຸດ ຈາກທຸກພາກຂອງປະເທດ. ປະຊາກອນສ່ວນໃຫຍ່ແມ່ນມາຈາກບັນດາແຂວງ ທີ່ເປັນພູສູງທາງພາກເໜືອ ແລະ ຈາກແຂວງວຽງຈັນ. ໃນດ້ານກົງກັນຂ້າມ ປະຊາກອນເຄື່ອນຍ້າຍສ່ວນໜ້ອຍໜຶ່ງມາຈາກ ບັນດາແຂວງພາກໃຕ້ຍ້ອນວ່າ ໄວໜຸ່ມໃນບັນດາແຂວງດັ່ງກ່າວ ມັກຈະໄປຊອກເຮັດວຽກຢູ່ປະເທດໄທ (ພູໄຊ, 2010: 31).

ເຖິງແມ່ນວ່າພົນລະເມືອງລາວສ່ວນ ໃຫຍ່ຈະຢູ່ເຂດຊົນນະບົດ ແຕ່ສ່ວນທີ່ດໍາລົງຊີວິດຢູ່ໃນຕົວເມືອງ ກໍແມ່ນເພີ່ມຂຶ້ນຢ່າງໄວວາ ແລະ ຄາດຄະເນວ່າຈະເພີ່ມຂຶ້ນເລື້ອຍໆ. ໃນການຄາດຄະເນຂອງອົງການສະຫະປະຊາຊາດ ໄດ້ຊີ້ໃຫ້ເຫັນວ່າການຂະຫຍາຍຕົວຂອງພົນລະເມືອງຢູ່ຊົນນະບົດ ແມ່ນເກືອບຢຸດແລ້ວ, ເຊິ່ງມີອັດຕາການຂະຫຍາຍຕົວຢູ່ 0.15% ໃນປີ 2010-15, ແລະ ພົນລະເມືອງໃນປີ 2030 ຈະມີຈໍານວນເທົ່າໃນປີ 2014.

ສປປ ລາວ ບໍ່ມີຕົວເມືອງຂະໜາດກວ້າງໃຫຍ່. ນະຄອນຫຼວງວຽງຈັນ ກໍບໍ່ໃຫຍ່ຖ້າທຽບໃສ່ມາດຕະຖານສາກົນ. ສະນັ້ນປະເທດລາວຈະບໍ່ຕ້ອງປະເຊີນກັບບັນດາບັນຫາ ຈາກການເປັນຕົວເມືອງໃຫຍ່ໆ. ບັນຫາຈະແມ່ນເຮັດແນວໃດ ຈະກະຈາຍການຂະຫຍາຍຕົວຂອງຕົວເມືອງຕ່າງໆ ໃຫ້ກາຍເປັນສູນກາງການຂະຫຍາຍຕົວຂອງຂົງເຂດນັ້ນ, ເພື່ອໃຫ້ໝາກຜົນຂອງການພັດທະນາ ຈະສາມາດຂະຫຍາຍກວ້າງອອກອີກ. ຂໍ້ມູນພົນລະເມືອງໃນຕົວເມືອງໃນປະຈຸບັນແມ່ນຍັງບໍ່ມີ. ຜົນການສໍາຫຼວດພົນລະເມືອງໃນປີ 2005 ສະແດງໃຫ້ເຫັນຈໍານວນພົນລະ ເມືອງໃນຕົວເມືອງໃຫຍ່ດັ່ງລຸ່ມນີ້. ຖ້າສົມມຸດວ່າພົນລະເມືອງມີການຂະຫຍາຍຕົວໃນອັດຕາ 5.3% ຕໍ່ປີ ເປັນຕົ້ນມາ (ເຊິ່ງອັດຕາການຂະຫຍາຍຕົວສໍາລັບພົນລະເມືອງເຂດຕົວເມືອງຂອງ ສປປ ລາວ ໃນໄລຍະນັ້ນສົມມຸດຕິຖານໂດຍ ພະແນກປະຊາກອນຂອງອົງການສະຫະປະຊາຊາດ), ພົນລະເມືອງໃນປີ 2014 ແມ່ນໄດ້ສະແດງໃນຕາຕະລາງລຸ່ມນີ້. ແຕ່ແນ່ນອນແຕ່ລະເມືອງບໍ່ໄດ້ມີການຂະຫຍາຍຕົວ ໃນອັດຕາດຽວກັນ.

| ເມືອງ | ພົນລະເມືອງ ປີ 2005 | ພົນລະເມືອງ ປີ 2014 ສົມມຸດຂະຫຍາຍຕົວ 5.3% ຕໍ່ປີ |
|---|---|---|
| ນະຄອນຫຼວງວຽງຈັນ* | 569,729 | 907,000 |
| ໄກສອນພົມວິຫານ | 81,401 | 130,000 |
| ປາກເຊ | 57,669 | 92,000 |
| ຫຼວງພະບາງ | 55,027 | 88,000 |
| ທ່າແຂກ | 38,130 | 61,000 |
| ແປກ | 37,893 | 60,000 |

*ພະແນກປະຊາກອນຂອງສະຫະປະຊາຊາດ ຄາດຄະເນສໍາລັບນະຄອນຫຼວງວຽງຈັນ ໃນປີ 2014 ແມ່ນ 946,000 ຄົນ

ການຄາດຄະເນຂອງ ອົງການສະຫະປະຊາຊາດໄດ້ສົມມຸດຕິຖານ ອັດຕາການຂະຫຍາຍຕົວຂອງປະຊາກອນໃນຕົວເມືອງ ແມ່ນມີຄວາມໄວສູງຫຼາຍ ເຊິ່ງສອດຄ່ອງກັບບົດຮຽນຂອງສາກົນ, ທີ່ສະແດງໃຫ້ເຫັນວ່າຫຼັງຈາກທີ່ບັນລຸອັດຕາສ່ວນປະມານ 30% ແລ້ວ, ອັດຕາການ

ຂະຫຍາຍຕົວ ຂອງປະຊາກອນໃນເຂດຕົວເມືອງຈະພຸ່ງຂຶ້ນສູງເຖິງ 50% ຂອງປະຊາກອນ. ແນ່ນອນບົດຮຽນຂອງແຕ່ລະປະເທດຈະແຕກຕ່າງກັນໄປຈາກແນວໂນ້ມນີ້, ແຕ່ໃນກໍລະນີ ຂອງ ສປປ ລາວ ເຫັນວ່າ ຈະເປັນໄປຕາມທ່າອ່ຽງນີ້. ອີງຕາມຜົນການສໍາຫຼວດພົນລະເມືອງ ປີ 2005 , ອັດຕາພົນລະເມືອງທີ່ຢູ່ໃນຕົວເ ມືອງຂອງປີນັ້ນແມ່ນ 27.1%, ເຊິ່ງໂດຍລວມແມ່ນຢູ່ໃນໄລຍະທີ່ ອັດຕາການຂະຫຍາຍຕົວຂອງປະຊາກອນ ກໍາລັງຈະເພີ່ມຂຶ້ນ. ອົງການສະຫະປະຊາຊາດໄດ້ຄາດຄະເນວ່າສັດສ່ວນພົນລະເມືອງຂອງ ສປປ ລາວ ຈະເພີ່ມຂຶ້ນດັ່ງຕໍ່ໄປນີ້:

| | |
|---|---|
| 2010 | 33.1 |
| 2015 | 38.6 |
| 2020 | 43.5 |
| 2025 | 47.7 |
| 2030 | 50.9 |
| 2035 | 53.4 |
| 2040 | 55.9 |

ການຄາດຄະເນ ສັດສ່ວນພົນລະເມືອງໃນການຄາດຄະເນ ສັດສ່ວນພົນລະເມືອງເຂດຕົວເມືອງແມ່ນ 50.9 ໃນປີ 2030 - ມີພຽງອີກ 15 ປີ ເທົ່ານັ້ນ - ເຊິ່ງເປັນໜ້າຕົກໃຈ. ນັ້ນໝາຍຄວາມວ່າ ພົນລະເມືອງໃນຕົວເມືອງຈະເພີ່ມເປັນປະມານ 4.36 ລ້ານຄົນ, ເຊິ່ງຫຼາຍກວ່າທົບເຄິ່ງຂອງປີ 2010 ທີ່ມີປະມານ 2.08 ລ້ານ. ໝາຍຄວາມວ່າປະຊາກອນໃນນະຄອນຫຼວງວຽງຈັນ ຈະເພີ່ມເປັນ 2 ເທົ່າໃນປີນັ້ນ, ຖ້າຫາກວ່າສັດສ່ວນຂອງພົນລະເມືອງໃນຕົວເມືອງຍັງເປັນຄືເກົ່າ. ນະຄອນຫຼວງວຽງຈັນເປັນ “ເມືອງໃຈກາງ” ຖ້າທຽບກັບສະພາບຂອງປະເທດທາງໃຕ້ດນາມ, ເນື່ອງຈາກວ່າມີສະຖານທີ່ຕັ້ງເປັນຍຸດທະສາດ ແລະ ເປັນດິນທີ່ອຸດົມສົມບູນ. ດັດຊະນີການເປັນເມືອງໃຈກາງໃນ 5 ຕົວເມືອງ ຂອງ ສປປ ລາວ (ຈໍານວນພົນລະເມືອງຂອງເມືອງທີ່ໃຫຍ່ທີ່ສຸດ ຫານໃຫ້ພົນລະເມືອງຈາກ 4 ຕົວເມືອງບວກກັນ) ແມ່ນ 2.5 ໃນປີ 2005, ເຊິ່ງເປັນຕົວເລກທີ່ຂ້ອນຂ້າງສູງ.

ອີງຕາມເສັ້ນທາງການພັດທະນາ ຂອງ ສປປ ລາວ, ລະດັບການເປັນເມືອງໃຈກາງສາມາດເປັນໄປໄດ້ທັງສອງທາງຄື ອາດຈະແຂງຂຶ້ນ ຫຼື ຊຸດໂຊມລົງ. ເຖິງວ່ານະຄອນຫຼວງວຽງຈັນຈະມີທີ່ຕັ້ງທີ່ເປັນຍຸດທະສາດ, ແຕ່ປະເທດລາວມີຮູບຮ່າງຍາວ ແລະ ການພັດທະນາການເຊື່ອມໂຍງຂ້າມພົມແດນ ທີ່ເຂັ້ມເຂງສຸມໃສ່ເມືອງອື່ນໆເຊັ່ນ ເມືອງໄກສອນ, ສາມາດສ້າງຄວາມເຂັ້ມແຂງໃຫ້ບັນດາເມືອງດັ່ງກ່າວ.

ລາວມີປະຊາກອນຜູ້ສູງອາຍຸ ໃນອັດຕາທີ່ຕໍ່າຫຼາຍ, ແລະ ອັດຕາເຫຼົ່ານີ້ ແມ່ນຈະເລີ່ມສູງຂຶ້ນຢ່າງໄວວາຫຼັງຈາກປີ 202. ເພາະສະນັ້ນການທີ່ປະຊາກອນມີອາຍຸສູງຂຶ້ນ ນັ້ນບໍ່ແມ່ນສິ່ງທີ່ໜ້າເປັນຫ່ວງໃນໄລຍະອັນໃກ້ນີ້. ເຖິງຢ່າງໃດກໍຕາມ, ຫຼັງຈາກໄລຍະນີ້ແລ້ວຈໍານວນຜູ້ສູງອາຍຸ ຈະເພີ່ມຂຶ້ນຢ່າງໄວວາກວ່າກຸ່ມຄົນໄວ

ອາຍຸອື່ນໆ, ສະນັ້ນຈຶ່ງເປັນເວລາທີ່ຕ້ອງມີການກະກຽມວາງແຜນໄວ້ລ່ວງໜ້າ ສໍາລັບນະໂຍບາເໝາະສົມຕໍ່ກັບກຸ່ມຜູ້ສູງອາຍ. ອົງປະກອບໜຶ່ງໃນການວາງແຜນນີ້ ຄວນຈະໄປພ້ອມກັບທ່າແຮງ ໃນການເກັບສະສົມເງິນຂອງ "ກຸ່ມປະຊາກອນຜູ້ສູງອາຍຸ", ແນວໂນ້ມຂອງການທ້ອນເງິນ ແມ່ນສູງໃນກຸ່ມທີ່ກຽມອອກບໍານານ.

## ບັນຫາຕ່າງໆກ່ຽວກັບຂໍ້ມູນ

ການມີຂໍ້ມູນທີ່ຊັດເຈນ ແລະ ທັນເວລາແມ່ນເປັນສິ່ງຈໍາເປັນສໍາລັບການວາງແຜນ ທີ່ມີປະສິດທິພາບ ແລະ ການຕິດຕາມກວດກາແຜນງານພັດທະນາ. ປະລິມານປະຊາກອນ ແລະ ກໍາລັງແຮງງານ ຢູ່ລາວແມ່ນມີການເພີ່ມຂຶ້ນພໍສົມຄວນ, ແຕ່ກໍຍັງມີບາງປະເດັນທີ່ຄວນເອົາໃຈໃສ່. ສິ່ງເຫຼົ່ານີ້ໄດ້ກາຍມາເປັນຫຼັກຖານອ້າງອີງໃນເວລານີ້, ໃນເວລາມີການກະກຽມເພື່ອລົງສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສປີ 2015. ຂໍ້ມູນການສໍາຫຼວດພົນລະ ເມືອງຄັ້ງຫຼ້າສຸດ - ປີ 2005 - ນັ້ນແມ່ນຂໍ້ມູນທີ່ເກົ່າແລ້ວ, ແລະ ຂໍ້ມູນການສໍາຫຼວດພົນລະເມືອງປີ 2015 ຈະສໍາເລັດບໍ່ທັນໃນການຊ່ວຍກະກຽມແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8. ການທີ່ມີຊ່ວງໄລຍະຫ່າງກັນຫຼາຍ ລະຫວ່າງ ການສໍາຫຼວດພົນລະເມືອງແຕ່ລະຄັ້ງນັ້ນເຮັດໃຫ້ການສໍາຫຼວດອື່ນໆ ມີຄວາມສໍາຄັນເຊັ່ນ - ການສໍາຫຼວດກໍາລັງແຮງງານ, ການສໍາຫຼວດກະສິກໍາ, ການສໍາຫຼວດດັດຊະນີໝາຍສັງຄົມລາວ ແລະ ການສໍາຫຼວດປະຊາກອນ ແລະ ສຸຂະພາບ. ການສໍາຫຼວດເຫຼົ່ານີ້ບໍ່ພຽງແຕ່ສະໜອງຂໍ້ມູນທີ່ທັນການ ແຕ່ຍັງສະໜອງຂໍ້ມູນທີ່ມີລັກສະນະສະເພາະຂອງແຕ່ຂົງເຂດບັນຫາ. ແຕ່ວ່າ, ບັນຫາທີ່ສໍາຄັນທີ່ສຸດແມ່ນຄຸນະພາບຂອງບາງຂໍ້ມູນທາງການ. ຕົວຢ່າງ, ອັດຕາການມີສ່ວນຮ່ວມຂອງກໍາລັງແຮງງານ ແລະ ອັດຕາການຫວ່າງງານທີ່ຄາດຄະເນ ໃນການສໍາຫຼວດກໍາລັງແຮງງານ ປີ 2010 ແມ່ນຕໍ່າກວ່າຜົນຄາດຄະເນຈາກບົດລາຍງານການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) 3 ຄັ້ງຜ່ານມາແມ່ນໜ້າເປັນຫວ່າງ (ອົງການທະນາຄານໂລກ, 2014: ພາກພະໜວກ 1).

ການຄາດຄະເນປະຊາກອນ ທີ່ເປັນທາງການແມ່ນໃກ້ຈະມີການເຜີຍແຜ່ ແລະ ລັດຖະບານມີຄວາມຈໍາເປັນ ຕ້ອງໄດ້ເນັ້ນໜັກໃຫ້ທຸກໆອົງກອນຂອງລັດຖະບານໄດ້ນໍາໃຊ້ ແລະ ໃຫ້ສອດຄ່ອງກັນ. ເຖິງຢ່າງໃດກໍຕາມ, ການຄາດຄະເນປະຊາກອນທີ່ເປັນທາງການ ຕ້ອງມີການຄາດຄະເນໃຫ້ແຕ່ລະແຂວງ ເນື່ອງຈາກວ່າ ເຂົາເຈົ້າຈໍາເປັນຕ້ອງເອົາມານໍາໃຊ້ເຂົ້າໃນການວາງແຜນຂອງແຂວງ ແລະ ຂັ້ນເມືອງກໍເຊັ່ນດຽວກັນ, ການຄາດຄະເນປະຊາກອນແມ່ນມີຄວາມຈໍາເປັນ ສໍາລັບເປົ້າໝາຍຂອງການບໍລິການ ແລະ ດັ່ງນັ້ນຈຶ່ງມີຄວາມຈໍາ

ເປັນທີ່ຕ້ອງມີການຄິດໄລ່ ໂດຍນຳໃຊ້ວິທີການອັດຕາສ່ວນ ແລະ ວິທີການອື່ນໆ.

ໃນໄລຍະຍາວ, ການຈົດທະບຽນທີ່ຖືກຕ້ອງແມ່ນເປັນສິ່ງສຳຄັນຫຼາຍ ເພື່ອເກັບກຳບັນທຶກການປ່ຽນແປງ ໃນແຕ່ລະປີສຳລັບສະຖິຕິປະຊາກອນ ລວມທັງຄວາມຈຳເປັນໃນການຈົດທະບຽນຂັ້ນພື້ນຖານ. ໃນຕົ້ນປີ 2015-16 ກະຊວງສາທາລະນະສຸກ ເລີ່ມການວາງແຜນຈົດທະບຽນການເກີດ ແລະ ການຕາຍໂດຍການຝຶກອົບຮົມໃຫ້ ພະນັກງານສາທາລະນະສຸກຢູ່ຕາມໂຮງໝໍຂັ້ນແຂວງ, ເມືອງ ແລະ ບ້ານ. ນອກຈາກນັ້ນ ເຂົາເຈົ້າຍັງຈະໄດ້ຮັບການຝຶກອົບຮົມ ໃນການພິສູດສາເຫດຂອງການຕາຍ. ເຖິງຢ່າງໃດກໍຕາມຍັງມີຫຼາຍການເກີດ ແລະ ການຕາຍຢູ່ໃນເຮືອນ, ໃນກໍລະນີນີ້ນາຍບ້ານຈະເປັນຜູ້ປະກອບຟອມ. ຕາມປະສົບການຂອງປະເທດອື່ນໆ ໄດ້ສະແດງໃຫ້ເປັນວ່າມັນບໍ່ງ່າຍທີ່ຈະຍົກລະດັບລະບົບ ການຈົດທະບຽນທີ່ບໍ່ມີຄຸນນະພາບໃຫ້ດີຂຶ້ນ ແຕ່ເຖິງຢ່າງໃດກໍຕາມ ສິ່ງທ້າທາຍນີ້ຈຳເປັນຕ້ອງໄດ້ຮັບການແກ້ໄຂ.

## ຂໍ້ແນະນຳ ທາງດ້ານນະໂຍບາຍ ທີ່ກ່ຽວຂ້ອງກັບແນວໂນ້ມຂອງປະຊາກອນ

ນະໂຍບາຍທີ່ກ່ຽວຂ້ອງກັບ ແນວໂນ້ມຂອງປະຊາກອນ ແມ່ນແຍກອອກເປັນສອງປະເພດຫຼັກ ເຊັ່ນ ນະໂຍບາຍການໂຕ້ຕອບທາງດ້ານປະຊາກອນ ແລະ ນະໂຍບາຍທີ່ສົ່ງອິດທິພົນຕໍ່ປະຊາກອນ, ແຕ່ເຖິງຢ່າງໃດກໍຕາມກໍມີຫຼາຍໆນະໂຍບາຍໄດ້ລວມເອົາທັງສອງປະເພດນີ້.

ໃນບັນດານະໂຍບາຍທີ່ນອນຢູ່ໃນປະເພດນະໂຍບາຍການໂຕ້ຕອບ ທາງດ້ານປະຊາກອນ ແມ່ນ ນະໂຍບາຍທີ່ໄດ້ສະໜອງການບໍລິການດ້ານການສຶກສາ ແລະ ສາທາລະນະສຸກເພື່ອການເຕີບໃຫຍ່ຂະຫຍາຍຕົວຂອງ ປະຊາກອນ ເຊິ່ງລວມທັງການວາງນະໂຍບາຍ ການພັດທະນາຕົວເມືອງ ເພື່ອໃຫ້ຮອງຮັບກັບການເຄື່ອນຍ້າຍແຮງງານຈາກທ້ອງຖິ່ນ ແລະ ຕ່າງປະເທດ. ການກະກຽມການຝຶກອົບຮົມສຳລັບແຮງງານໃນແຕ່ລະກຸ່ມ ເພື່ອໃຫ້ແທດເໝາະກັບການຈ້າງງານ. ນະໂຍບາຍການສຶກສາ, ນອກຈາກຈະຕອບສະໜອງຄວາມຕ້ອງການຂອງປະຊາກອນ ໃນການໃຫ້ການບໍລິການແລ້ວມັນຍັງມີອິດທິພົນຕໍ່ແນວໂນ້ມຂອງປະຊາກອນອີກດ້ວຍ, ເນື່ອງຈາກວ່າມີຫຼັກຖານທີ່ຈະແຈ້ງວ່າການທີ່ປະຊາກອນມີການສຶກສາທີ່ດີນັ້ນ ເຂົາເຈົ້າມີແນວໂນ້ມທີ່ຈະມີອັດຕາການຈະເລີນພັນຕ່ຳ ແລະ ອັດຕາການຕາຍຂອງແມ່ກໍຕ່ຳລົງ.

ນະໂຍບາຍທີ່ສົ່ງອິດທິພົນຕໍ່ປະຊາກອນອາດຈະຈັດເຂົ້າໃນປະເພດ ທີ່ມີຜົນກະທົບຕໍ່ການຈະເລີນພັນ, ອັດຕາການຕາຍ ຫຼື ການເຄື່ອນ

ຍ້າຍແຮງງານ. ເຖິງຢ່າງໃດກໍຕາມ, ນະໂຍບາຍນີ້ມີການເອົາມານໍາໃຊ້ໜ້ອຍຫຼາຍ. ນະໂຍບາຍສຸຂະພາບຈະເລີນພັນແມ່ນເປັນຕົວຢ່າງທີ່ດີ. ນະໂຍບາຍສຸຂະພາບຈະເລີນພັນທີ່ມີປະສິດທິພາບແມ່ນມີແນວໂນ້ມທີ່ຈະຫຼຸດອັດຕາການຈະເລີນພັນລົງ, ເນື່ອງຈາກວ່າມັນຈະສະໜອງຄວາມຕ້ອງການໃນການຫຼຸດການຖືພາທີ່ບໍ່ຕ້ອງການ ຫຼື ໃນການວາງແຜນຄອບຄົວ. ເຖິງຢ່າງໃດກໍຕາມເປົ້າໝາຍແມ່ນເພື່ອເສີມຂະຫຍາຍແຜນງານສຸຂະພາບຈະເລີນພັນ ໃຫ້ກວ້າງອອກໃຫ້ແທດເໝາະກັບຄວາມຕ້ອງການຂອງແມ່ຍິງ, ເຊິ່ງແຜນງານຈະມີຜົນເຮັດໃຫ້ ອັດຕາການຕາຍຂອງແມ່ ແລະ ເດັກຫຼຸດລົງຫຼາຍກ່ວາເກົ່າ.

ສໍາລັບແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8, ການວິໄຈຂໍ້ມູນໃນບົດລາຍງານນີ້ໄດ້ໃຫ້ຄໍາແນະນໍາດ້ານນະໂຍບາຍຫຼາຍຢ່າງ ດັ່ງຕໍ່ໄປນີ້:

1. ການເຕີບໂຕຂອງ ຈໍານວນປະຊາກອນແມ່ນມີທ່າອ່ຽງຫຼຸດລົງແຕ່ຈໍານວນ ປະຊາກອນແມ່ນຄາດວ່າຈະເພີ່ມຂຶ້ນ ຢ່າງໜ້ອຍສອງສ່ວນສາມກ່ອນມັນຈະຢູ່ໃນ ລະດັບອີ່ມຕົວ. ສປປ ລາວ ສາມາດຮັບມືກັບການເພີ່ມຂຶ້ນຂອງປະຊາກອນນີ້ໄດ້ ຖ້າມີນະໂຍບາຍການພັດທະນາທີ່ເໝາະສົມ. ບໍ່ຈໍາເປັນຕ້ອງສ້າງເປົ້າໝາຍສະເພາະຕໍ່ອັດຕາການເຕີບໂຕຂອງປະຊາກອນ. ທ່າອ່ຽງຂອງການຂະຫຍາຍຕົວຂອງ ປະຊາກອນຕ້ອງໄດ້ມີການຕິດຕາມ ກວດກາເປັນປະຈໍາ, ຖ້າຫາກການເຕີບໂຕມີຄວາມແຕກຕ່າງຈາກການຄາດຄະເນໄວ້ ຕ້ອງໄດ້ມີການສຶກສາ ເຖິງຜົນກະທົບຂອງຄວາມແຕກຕ່າງນັ້ນ, ຖ້າມີຄວາມຈໍາເປັນຕ້ອງໄດ້ມີການດັດປັບນະໂຍບາຍ ໃຫ້ແທດເໝາະກັບແນວໂນ້ມ.

2. ຕ້ອງເລັ່ງໃສ່ການແກ້ໄຂເພື່ອຕອບສະໜອງຄວາມຕ້ອງການ ການວາງແຜນຄອບຄົວໃຫ້ແກ່ ຜູ້ທີ່ຕ້ອງການແຕ່ບໍ່ສາມາດເຂົ້າເຖິງເຊິ່ງຈະຊ່ວຍໃຫ້ຄູ່ຜົວເມຍສາມາດກໍານົດຂະໜາດຂອງຄອບຄົວ ແລະ ກໍານົດ ເວລາຈະມີລູກໄດ້ຕາມຄວາມຕ້ອງການ ພ້ອມກັນນັ້ນຍັງຊ່ວຍຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກອ່ອນ.

3. ການບັນລຸເປົ້າໝາຍສະຫັດສະຫວັດເພື່ອການພັດທະນາໂດຍສະເພາະ ອັດຕາການຕາຍຂອງເດັກຕໍ່າກວ່າ 5 ປີ ແລະ ອັດຕາການຕາຍຂອງແມ່ຄວນຖືເປັນບູລິມະສິດອັນສູງ, ອັດຕາການຕາຍຫລຸດລົງຈະມີຜົນປະໂຫຍດຕໍ່ສະຫວັດດີການທີ່ດີ, ບໍ່ພຽງແຕ່ໃນການຮັກສາ ຊີວິດຂອງເຂົາເຈົ້າເທົ່ານັ້ນແຕ່ແມ່ນສໍາລັບຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້ານໍາອີກ.

4. ນະໂຍບາຍຕ່າງໆຄວນມີການນໍາມາໝູນໃຊ້ເພື່ອໃຫ້ເກີດຜົນປະໂຫຍດສູງສຸດ ຈາກຜົນປະໂຫຍດທາງດ້ານປະຊາກອນ ທີ່

ສປປ ລາວ ກຳລັງໄດ້ຮັບ. ໜຶ່ງໃນນັ້ນແມ່ນການເພີ່ມອັດຕາສ່ວນ ການເຂົ້າຮຽນຂອງເດັກນ້ອຍ. ນອກຈາກນີ້ວິທີການນີ້ຍັງມີຄວາມຈຳເປັນທີ່ສຸດ ບໍ່ພຽງແຕ່ເປັນການເພີ່ມໂອກາດ ໃຫ້ແກ່ເດັກນ້ອຍແຕ່ລະຄົນມີວຽກເຮັດງານທຳໃນອານາຄົດເທົ່ານັ້ນ ແຕ່ຈະເປັນສິ່ງສຳຄັນ ທີ່ຈະຊ່ວຍເສດຖະກິດຂອງ ສປປ ລາວ ໃຫ້ມີການເພີ່ມມູນຄ່າໃນຕ່ອງໂສ້ການຜະລິດໃຫ້ສູງຂຶ້ນ. ຈຳນວນເດັກນ້ອຍ ແມ່ນຄາດຄະເນວ່າຈະບໍ່ມີການປ່ຽນແປງຫຼາຍ, ແຜນພັດທະນເສດຖະກິດສັງຄົມ ຄັ້ງທີ 8 ແມ່ນເປັນໄລຍະເວລາທີ່ເໝາະສົມທີ່ສຸດ ໃນການຮັບຮອງເອົາຍຸດທະສາດ "ການພັກດັນອັນໃຫຍ່ຫຼວງ" ໃນການສຶກສາເຊິ່ງຈະຊ່ວຍໃນການສ້າງຂະບວນການ ເພີ່ມອັດຕາການເຂົ້າຮຽນໄດ້ຢ່າງໄວວາ ແລະ ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນ.

5. ເນື່ອງຈາກການເພີ່ມຂຶ້ນຢ່າງໄວວາຂອງກຳລັງແຮງງານ ແລະ ຈຳນວນແຮງງານທີ່ເພີ່ມຂຶ້ນໃນຂະແໜງການກະສິກຳ, ວິທີການ 2 ດ້ານທີ່ຄວນພິຈາລະນາໃນນະໂຍບາຍພັດທະນາ: ເພີ່ມປະສິດຕິພາບການຜະລິດໃນຂະແໜງກະສິກຳ, ແລະ ພັດທະນາຂະແໜງການອຸດສາຫະກຳ ແລະ ການບໍລິການໃຫ້ເຂັ້ມແຂງຂຶ້ນເພື່ອຮັບເອົາແຮງງານມາຈາກຂະແໜງກະສິກຳ.

6. ໂດຍລວມແລ້ວລະດັບການສຶກສາຂອງກຳລັງແຮງງານລາວແມ່ນຍັງຕ່ຳດັ່ງນັ້ນ ການຝຶກອົບຮົມກຳລັງແຮງງານ ໃນປະຈຸບັນຄວນເປັນບູລິມາສິດທີ່ສຳຄັນ (ບໍ່ວ່າຈະເປັນການຝຶກງານ ຫຼື ຜ່ານສະຖາບັນຝຶກອົບຮົມ). ຄວາມຕ້ອງການໃນການຝຶກອົບຮົມນັ້ນ ຄວນມີການສຶກສາໃຫ້ລະອຽດກ່ຽວກັບແນວໂນ້ມ ການພັດທະນາອຸດສະຫະກຳ ແລະ ຄວາມຕ້ອງການທາງດ້ານທັກສະວິຊາການ, ເພື່ອໃຫ້ເນື້ອໃນການສຶກສາທາງດ້ານວິຊາການແທດເໝາະກັບຄວາມຕ້ອງການ.

7. ນະໂຍບາຍຕໍ່ກັບການເຄື່ອນຍ້າຍແຮງງານ, ການຈ້າງງານ ແລະ ການພັດທະນາຕົວເມືອງຄວນໄປຄຽງຄູ່ກັນ. ການຂະຫຍາຍຕົວຂອງເສດຖະກິດລາວ ຈະເພີ່ມຂຶ້ນ ຖ້າອັດຕາການເຮັດວຽກກະສິກຳແບບກຸ້ມຕົນເອງນັ້ນຫຼຸດລົງ ແລະ ແຮງງານເຮັດວຽກໄດ້ຍ້າຍໄປຢູ່ຂະແໜງການ ທີ່ມີຜົນຜະ ລິດສູງຂຶ້ນ. ນີ້ສ່ວນຫຼາຍຮຽກຮ້ອງໃຫ້ມີການຍົກຍ້າຍຖິ່ນຖານ ແລະ ໃນທີ່ສຸດແລ້ວວຽກງານຂະແໜງບໍລິການແລະອຸດສະຫະກຳຈະມາສຸມຢູ່ໃນເຂດຕົວເມືອງ.

8. ນະໂຍບາຍ ການຫັນໃຫ້ເປັນຕົວເມືອງຄວນຄຳນຶງເຖິງການພັກດັນ ທີ່ເກີດຂຶ້ນຕາມທຳມະຊາດບໍ່ຄວນຕໍ່ຕ້ານແນວໂນ້ມເຊິ່ງການເຄື່ອນຍ້າຍບໍ່ແມ່ນສິ່ງທີ່ບໍ່ດີສະເໝີໄປ. ຕົວຢ່າງ, ເຖິງແມ່ນວ່າໂຄງສ້າງຂອງຕົວເມືອງໃນປະຈຸບັນແມ່ນຢູ່ໃນລະ

ດັບເລີ່ມຕົ້ນ, ແຕ່ການເຕີບຂອງເສດຖະກິດລວມສູນອາດເກີດຂຶ້ນໄດ້ ໃນນະຄອນຫຼວງວຽງຈັນ, ເຊິ່ງປະຊາກອນມີທ່າອ່ຽງທີ່ຈະບໍ່ຂະຫຍາຍຕົວ ເກີນລະດັບທີ່ສາມາດຮັບມືໄດ້. ສໍາລັບການຂະຫຍາຍຕົວຂອງເມືອງອື່ນໆນັ້ນ ກໍສາມາດກໍ່ໃຫ້ເກີດປະໂຫຍດແກ່ເສດຖະກິດໃນຂົງເຂດອື່ນໆ ເຊິ່ງສິ່ງເຫຼົ່ານີ້ຄວນໄດ້ ຮັບການສົ່ງເສີມຕົວຢ່າງການລົງທຶນໃສ່ການປັບປຸງ ການຄົມມະນາຄົມ ເພື່ອອໍານວຍຄວາມສະດວກ

**9.** ໃຫ້ແກ່ການຄ້າກັບບັນດາປະເທດໃກ້ຄຽງ.

ເຖິງແມ່ນບັນຫາປະຊາກອນຜູ້ສູງອາຍຸ ຈະໄດ້ຮັບການເອົາໃຈໃສ່ໃນລະດັບສາກົນ ກໍຕາມ ເຫດຜົນທີ່ດີອັນໜຶ່ງສໍາລັບສະພາບຈຸດພິເສດຂອງລາວ ແມ່ນຈໍານວນຜູ້ສູງອາຍຸນັ້ນ ຍັງມີອັດຕາຕໍ່າຫຼາຍຈົນເຖິງທ້າຍປີ 2020, ນີ້ໝາຍຄວາມວ່າມັນໄວໂພດທີ່ຈະໃຫ້ບູລິມະສິດ. ໃນແຜນພັດທະນາເສດຖະກິດ ຄັ້ງທີ 8 ນີ້ ຍັງມີຫຼາຍບັນຫາອື່ນໆ ທີ່ຄວນເອົາເປັນບູລິມະສິດຫຼາຍກວ່າ.

# ເອກະສານອ້າງອີງ

ລັດຖະບານ ສປປ ລາວ ແລະ ອົງການ ສະຫະປະຊາຊາດ, 2013, ບົດລາຍຄວາມຄືບໜ້າການບັນລຸເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາ ຂອງ ສປປ ລາວ ປະຈຳປີ 2013 (The Millennium Development Goals Progress Report for the Lao PDR 2013), ນະຄອນຫຼວງວຽງຈັນ.

Hervish, Alexandra and Charlotte Feldman-Jacobs, 2011, "Who speaks for me? Ending child marriage", Policy Brief, Population Reference Bureau, Washington, DC.

ການສຳຫຼວດກຳລັງແຮງງານ ແລະ ການໃຊ້ແຮງງານເດັກ, ປີ 2010, ນະຄອນຫຼວງວຽງຈັນ, 2012 ສູນສະຖະຕິແຫ່ງຊາດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການແຮງງານສາກົນ ILO, 2012, ບົດລາຍງານການສຳຫຼວດແຮງງານເດັກແຫ່ງຊາດ 2010, ນະຄອນຫຼວງວຽງຈັນ.

Ministry of Education and Global Education Partnership, 2014, 2012 Lao PDR EGRA Survey Report.
ກະຊວງສາທາ ແລະ ສູນສະຖະຕິແຫ່ງຊາດ, 2012, ບົດລາຍງານການສຳຫຼວດດັດຊະນີໝາຍສັງຄົມລາວ (LSIS) 2011-12, ນະຄອນຫຼວງວຽງຈັນ.

Phouxay, Kabmanivanh, 2010, Patterns of Migration and Socio-economic Change in Lao PDR, Umea: Department of Social and Economic Geography, Umea University, Sweden.

Rigg, J., 2007, "Moving lives: migration and livelihoods in the Lao PDR", Population, Space and Place,

ພະແນກປະຊາກອນອົງການ ສປຊ, 2014, ການເຕີບໂຕຂອງປະຊາກອນໂລກ ໃນເຂດຕົວເມືອງ, New York: United Nations.

ອົງການ ທະນາຄານໂລກ (World Bank) ແລະ ອົງການທະນາຄານອາຊີ (ADB), 2012, ບົດລາຍງານການປະເມີນຜົນຄວາມສະເໝີພາບລະຫວ່າງຍິງ-ຊາຍ ຂອງ ສປປ ລາວ, Washington, DC.

ອົງການ ທະນາຄານໂລກ, 2014, ບົດລາຍງານການພັດທະນາ ຂອງ ສປປ ລາວ ປີ 2014: Expanding Productive Employment for Broad-based Growth, Vientiane: World Bank Group.